ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

01-07 ພະຈິກ 2024
ປີທີ 13
ສະບັບທີ 992
ລາຍສັປະດາ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

## ປິດກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ 45 ຢ່າງເປັນທາງການ



(ສພຊ) - ຜ່ານການດຳເນີນກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ພາຍໃຕ້ຄຳຂວັນ: "ບົດບາດຂອງລັດຖະສະພາໃນການຊຸກຍູ້ການເຊື່ອມຈອດ ແລະ ການເຕີບໂຕແບບກວມລວມຂອງອາຊຽນ" ໄດ້ດຳເນີນມາເປັນເວລາ 4 ວັນ ນັບແຕ່ວັນທີ 18 ເປັນ

ອ່ານຕໍ່ໜ້າ 7

## ກອງປະຊຸມ AIPA ຮັບຮອງມະຕິ 37 ສະບັບ



(ສພຊ) - ຕອນແລງວັນທີ 21 ຕຸລາຜ່ານມາ ທີ່ຫໍປະຊຸມແຫ່ງຊາດ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແລະ ປະທານໄອປາຄັ້ງທີ 45 ໄດ້ຖະ ແຫຼງຂ່າວຕໍ່ສື່ມວນຊົນທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບຜົນສຳເລັດຂອງການເປັນເຈົ້າພາບກອງປະຊຸມສະ

ອ່ານຕໍ່ໜ້າ 9

## ກອງປະຊຸມຄົບຄະນະວາລະທີ 2 ຂອງກອງປະຊຸມໃຫຍ່ AIPA-45




ອ່ານຕໍ່ໜ້າ 8

## ຄູ່ຮ່ວມຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງ ລາວ-ກຳປູເຈຍ

(ສພຊ) - ວັນທີ 23 ຕຸລານີ້ ທີ່ສະພາແຫ່ງຊາດ, ໄດ້ມີການພົບປະສອງຝ່າຍລະຫວ່າງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ກັບ ສົມເດັດ ມະຫາ ຣັດສະເພຍທິກາ ທິພະໄດ ຄູນ ສຸດາຣີ (Samdech Maha Rathsa pheathika Thipadei Khuon Sudary) ປະທານສະພາແຫ່ງຊາດ ແຫ່ງ ລາຊະອານາຈັກກຳ

ອ່ານຕໍ່ໜ້າ 8



## ສອງອົງການນິຕິບັນຍັດ ລາວ-ໄທ ຈະສືບຕໍ່ປະຕິບັດບົດບັນທຶກຄວາມເຂົ້າໃຈ

(ສພຊ) - ວັນທີ 21 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ, ໄດ້ມີການພົບປະສອງຝ່າຍລະຫວ່າງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ກັບ ທ່ານ ວັນມູຫະມັດນໍ ມະທາປະທານລັດຖະສະພາ, ປະທານສະພາຜູ້ແທນລາດສະດອນ ແຫ່ງ ລາຊະອານາຈັກໄທ ໃນໂອກາດເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງ

ອ່ານຕໍ່ໜ້າ 10



## ສະພາແຫ່ງຊາດ ລາວ-ເບລາຣຸດຊີ ສືບຕໍ່ ພົວພັນຮ່ວມມືທັງຂອບສອງຝ່າຍແລະຫຼາຍຝ່າຍ



ອ່ານຕໍ່ໜ້າ 7

## ສາຍພົວພັນມິດຕະພາບ, ການຮ່ວມມື ລາວ-ຕີມໍ ແລັດສະເຕ ພັດທະນາເຂົ້າສູ່ລ່ວງເລິກ



(ສພຊ) - ວັນທີ 23 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ພົບປະທ່ານ ນາງ ມາເຣຍ ເຟີນານດາ ເລ (Maria Fernanda Lay) ປະທານລັດຖະສະພາ ແຫ່ງສາທາລະນະລັດ ປະຊາທິປະໄຕ

ອ່ານຕໍ່ໜ້າ 10

## ການພົວພັນຮ່ວມມື ລາວ-ອານເຊຣີ ຂະຫຍາຍກ້າວຂຶ້ນເປັນລຳດັບ

(ສພຊ) - ຕອນບ່າຍວັນທີ 23 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມພົບປະຂອງທ່ານ ມອນເດີ ບູເດນ (Monder Bouden) ຮອງປະທານສະພາປະຊາຊົນແຫ່ງຊາດ (ສະພາຕ່ຳ) ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາ

ອ່ານຕໍ່ໜ້າ 8



ຊົມເຊີຍຜົນສຳເລັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ຢ່າງສຸດໃຈ!

# 2 ພາກສ່ວນ ມອບເງິນສະໜັບສະໜູນກອງປະຊຸມໄອປາ




(ສພຊ) - ວັນຈັນທີ 21 ຕຸລານີ້ ທີ່ສະພາແຫ່ງຊາດ, ໄດ້ມີພິທີມອບ-ຮັບເງິນປະກອບສ່ວນສະໜັບສະໜູນການເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ຈາກກອງທຶນ FG Foundation donate ຈຳນວນ 1.5 ລ້ານເອີໂຣ ແລະ ບໍລິສັດ ວັນນິດາ ສຳຫຼວດ-ແຮ່ທາດ ແລະ ການລົງທຶນ ຈຳກັດຜູ້ດຽວ ຈຳນວນ 2 ຕື້ກີບ ໂດຍການກ່າວມອບຂອງທ່ານ ດຣ. ແອນຕັນ ໂທໂດຣອບ (Anton Todorov) ສະມາຊິກສະພາບໍລິຫານ ບໍລິສັດ ITFI Global Co ແລະ ທ່ານ ເຫີຫຼົງ (HE Rong) ປະທານບໍລິສັດ ວັນນິດາ ສຳຫຼວດ-ແຮ່ທາດ ແລະການລົງທຶນ ຈຳກັດຜູ້ດຽວ ເຊິ່ງກ່າວຮັບໂດຍທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຂອບໃຈຕໍ່ສອງພາກສ່ວນ ແລະ ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ເພື່ອເປັນການຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ ແລະ ອຸປະຖຳໃນຄັ້ງນີ້.

**(ອານຸສອນ ພູມມີທອນ)**




# ກອງປະຊຸມສະມາຊິກລັດຖະສະພາໜຸ່ມໄອປາ




(ສພຊ) - ຕອນເຊົ້າວັນທີ 20 ຕຸລານີ້ ທີ່ຫໍປະຊຸມແຫ່ງຊາດ ໄດ້ມີກອງປະຊຸມສະມາຊິກລັດຖະສະພາໜຸ່ມໄອປາ ທີ່ຈັດຂຶ້ນໃນລະຫວ່າງກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ45 ໂດຍການເປັນປະທານຂອງທ່ານ ພອນສານ ວິໄລເມັ້ງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ, ຮອງປະທານສູນກາງສະຫະພັນກຳມະບານລາວ, ເຂົ້າຮ່ວມມີທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍສະມາຊິກລັດຖະສະພາຈາກບັນດາປະເທດສະມາຊິກອາຊຽນ.

ໃນກອງປະຊຸມ, ບັນດາຜູ້ແທນໄດ້ປະກອບຄຳຄິດເຫັນ ແລະ ພິຈາລະນາຕົກລົງຮັບຮອງເອົາ 3 ມະຕິຄື: 1) ຮ່າງມະຕິວ່າດ້ວຍການສ້າງຄວາມເຂັ້ມແຂງໃຫ້ແກ່ຊາວໜຸ່ມໃນການສ້າງປະຊາຄົມອາຊຽນທີ່ປອດໄພ, ເຂັ້ມແຂງ ແລະ ກວມ ລວມ; 2) ຮ່າງມະຕິວ່າດ້ວຍການເສີມສ້າງການມີສ່ວນຮ່ວມຂອງສະມາຊິກລັດຖະສະພາໜຸ່ມ ໃນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງທີ 3 ຢູ່ອາຊຽນ; 3) ຮ່າງມະຕິວ່າດ້ວຍການເພີ່ມທະວີບົດບາດຂອງຄະນະສະມາຊິກລັດຖະສະພາໜຸ່ມໄອປາ ໃນການຈັດຕັ້ງປະຕິບັດຖະແຫຼງການກອງປະຊຸມສະມາຊິກລັດຖະສະພາໜຸ່ມສາກົນຄັ້ງທີ9 ກ່ຽວກັບບົດບາດຂອງຊາວໜຸ່ມໃນການເລັ່ງລັດການບັນລຸເປົ້າໝາຍການພັດທະນາແບບຍືນຍົງ ໂດຍຜ່ານການຫັນເປັນດີຈິຕອນ ແລະ ນະວັດຕະກຳ.

**(ກົງທະນູຄຳ ພິພັດເສລີ)**

# ຜູ້ແທນກອງປະຊຸມໄອປາຄັ້ງທີ 45 ທ່ອງທ່ຽວຫຼວງພະບາງ ເມືອງມໍລະດົກໂລກ



(ສພຊ) - ວັນທີ 22 ຕຸລາຜ່ານມາ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະໄດ້ນຳພາບັນດາຜູ້ແທນທີ່ຫາກໍສຳເລັດການເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດ ອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ທີ່ ສປປ ລາວ ເປັນເຈົ້າພາບ ຢ້ຽມຢາມ ແລະ ທ່ອງທ່ຽວແຂວງຫຼວງພະບາງເມືອງມໍລະດົກໂລກ. ຄະນະຜູ້ແທນໄດ້ຢ້ຽມຊົມບັນດາປູຊະນີຍະສະຖານທີ່ມີປະຫວັດອັນຍາວນານ ແລະເປັນທີ່ຮູ້ຈັກກັນດີເຊັ່ນ: ວັດຊຽງທອງ ເຊິ່ງເປັນໜຶ່ງໃນບັນດາວັດທີ່ເກົ່າແກ່ທີ່ສຸດຂອງຫຼວງພະບາງ, ຄັ້ງໜຶ່ງໃນອະດີດແມ່ນວັດຫຼວງປະຈຳລາຊະວົງລ້ານຊ້າງ, ລາຊະວົງຫຼວງພະບາງແລະລາຊະວົງລາວ, ສ້າງຂຶ້ນປະມານປີ ຄສ. 1560 ໂດຍສົມເດັດພະເຈົ້າໄຊຍະເຊດຖາທິລາດ ກະສັດຜູ້ປົກຄອງລາຊະອານາຈັກລ້ານຊ້າງ, ຕັ້ງຢູ່ໃກ້ແມ່ນ້ຳຂອງ ເປັນວັດທີ່ມີສະຖາປັດຕະຍະກຳແບບລ້ານຊ້າງ ພາກເໜືອທີ່ງົດງາມຫຼາຍ ຈົນຖືກຂະໜານນາມວ່າ "ອັນຍະມະນີຂອງສິລະປະລ້ານຊ້າງ".

ຄະນະຜູ້ແທນຍັງໄດ້ຢ້ຽມຊົມຫໍພະບາງ, ຫໍພິພິທະພັນຫຼວງພະບາງ ຫຼື ພະລາຊະວັງເກົ່າ ແລະ ສະຖານທີ່ທ່ອງທ່ຽວ ທຳມະຊາດຕາດກວາງຊີ.

**(ບຸນເກີດ ວົງໄຊຍາ)**

# ພັນລະຍາຫົວໜ້າຄະນະຜູ້ແທນ AIPA ຢ້ຽມຊົມສະຖານທີ່ ທ່ອງທ່ຽວດ້ານວັດທະນະທຳຢູ່ນະຄອນຫຼວງວຽງຈັນ



(ສພຊ) - ລະຫວ່າງວັນທີ 19-21 ຕຸລາ 2024 ບັນດາພັນລະຍາຂອງຫົວໜ້າຄະນະຜູ້ແທນລັດຖະສະພາ ຈາກບັນດາປະເທດສະມາຊິກອາຊຽນ ແລະ ປະເທດອື່ນໆ ທີ່ເດີນທາງມາເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ແລະ ກອງປະຊຸມປີ່ນອ້ອມທີ່ ສປປລາວ ເປັນເຈົ້າພາບ ໄດ້ເຄື່ອນໄຫວຢ້ຽມຊົມສະຖານທີ່ທ່ອງທ່ຽວສຳຄັນດ້ານວັດທະນະທຳຢູ່ນະຄອນຫຼວງວຽງຈັນ ເຊິ່ງນຳພາຄະນະ ໂດຍທ່ານ ດຣ. ນາງ ວິພາວັນ ພົມວິຫານ ພັນລະຍາທ່ານປະທານສະພາແຫ່ງຊາດລາວ, ປະທານໄອປາ 45.

ພາຍຫຼັງເຂົ້າຮ່ວມພິທີເປີດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ຢ່າງເປັນທາງການ, ບັນດາທ່ານພັນລະຍາ ໄດ້ໄປຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມສະພາແຫ່ງຊາດ, ສະຖາປັດຕະຍະກຳເກົ່າແກ່ພະທາດຫຼວງວຽງຈັນ, ສູນວາງສະແດງຫັດຖະກຳສິນຄ້າໂອດ້ອບ ຈຳປາລ້ານຊ້າງ, ສູນວາງສະແດງແຜ່ນແພພື້ນເມືອງລາວ (ເຮືອນຂາວຂ້າງຫໍຄຳ). ຈາກນັ້ນ, ໄປຢ້ຽມຊົມຫໍວາງສະແດງສິນສາຍໄໝ ຢູ່ບ້ານຊຽງຍືນ ເມືອງຈັນທະບູລີ ເຊິ່ງເປັນອີກສະຖານທີ່ໜຶ່ງທີ່ສູນກາງສະຫະພັນແມ່ຍິງລາວ ໄດ້ສ້າງຕັ້ງຂຶ້ນເພື່ອສົ່ງເສີມແລະປົກປັກຮັກສາມູນເຊື້ອດ້ານຫັດຖະກຳຕ່ຳຫູກ-ທໍໄໝຂອງແມ່ຍິງລາວທີ່ຮູ້ປູກມອນ, ລ້ຽງມ້ອນຜະລິດເສັ້ນໄໝຍ້ອມສີທຳມະຊາດແລະຕ່ຳເປັນລວດລາຍຫຼາກຫຼາຍ ມາເປັນເວລາຢ່າງໜ້ອຍ 5 ພັນປີ; ດັ່ງນັ້ນ, ໃນປີ 1992 ສູນກາງສະຫະພັນແມ່ຍິງລາວ ຈຶ່ງໄດ້ດຳເນີນໂຄງການອະນຸຮັກ ແລະ ສົ່ງເສີມສິນສາຍໄໝ ເພື່ອສົ່ງເສີມ ແລະ ຟື້ນຟູການລ້ຽງ ມ້ອນສາວໄໝ, ອາຊີບເຮັດຫູກທໍໄໝ ແລະ ຫັດຖະກຳອື່ນໆຂອງແມ່ຍິງລາວ ທັງເປັນບ່ອນສະສົມຜ້າອາພອນທີ່ມີດອກດວງລວດລາຍອັນປານີດ ທີ່ໄດ້ມາຈາກສີໄມ້ລາຍມືອັນເປັນເອກະລັກຂອງແມ່ຍິງລາວບັນດາເຜົ່າ.

ໃນໂອກາດນີ້, ທ່ານ ດຣ. ນາງ ວິພາວັນ ພົມວິຫານ ພ້ອມດ້ວຍຄະນະພັນລະຍາການນຳສະພາແຫ່ງຊາດ ແຫ່ງ ສປປລາວ ຍັງໄດ້ຈັດພິທີບາສີສູ່ຂວັນຕາມຮີດຄອງປະເພນີລາວ ແລະ ງານລ້ຽງອາຫານທ່ຽງ ເພື່ອເປັນສິລິມຸງຄຸນແກ່ຄະນະພັນລະຍາຜູ້ແທນຕ່າງປະເທດນຳອີກ, ເຊິ່ງຈັດຂຶ້ນທີ່ໂຮງແຮມ ດັບເບິນທຣີ ບາຍ ຮິວຕັນ.

ຕອນຄ່ຳວັນທີ 21 ຕຸລານີ້, ຄະນະພັນລະຍາຂອງຫົວໜ້າຄະນະຜູ້ແທນກອງປະຊຸມສະມັດຊາໃຫຍ່ໄອປາ ຈະໄດ້ເຂົ້າຮ່ວມງານລ້ຽງ ໂດຍການເປັນເຈົ້າພາບຂອງປະທານສະພາແຫ່ງຊາດທ່ານ ປອ. ໄຊສົມພອນ ພົມວິຫານ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ທ່ານ ຄໍາໃບ ດໍາລັດ ພົບປະຮອງປະທານ ສະພາປະຊາຊົນແຫ່ງຊາດອານເຊຣີ



(ສພຊ)-ເພື່ອເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີລະຫວ່າງສອງປະເທດ ໃຫ້ນັບມື້ນັບຂະຫຍາຍຕົວ ແລະ ເປັນຮູບປະທໍາຍິ່ງໆຂຶ້ນ, ທ່ານຄໍາໃບດໍາລັດຮອງປະທານສະພາແຫ່ງຊາດພ້ອມດ້ວຍຄະນະ ໄດ້ພົບປະກັບທ່ານ ມອນເດີ ບູເດນ (Monder Bouden) ຮອງປະທານສະພາປະຊາຊົນແຫ່ງຊາດ (ສະພາຕໍ່າ) ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນອານເຊຣີ ພ້ອມດ້ວຍຄະນະ ໃນຕອນແລງວັນທີ 19 ຕຸລາຜ່ານມາ ໂອກາດທີ່ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45.

ໃນການພົບປະ, ສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີລະຫວ່າງສອງປະເທດລາວ-ອານເຊຣີ ກໍຄືລະຫວ່າງສອງອົງການນິຕິບັນຍັດ ພ້ອມທັງແຈ້ງສະພາບການທີ່ພົ້ນເດັ່ນຂອງປະເທດແລະວຽກງານຂອງອົງການນິຕິບັດຍັດໃຫ້ກັນແລະກັນຊາບ; ໄລຍະຜ່ານມາ, ສະພາແຫ່ງຊາດລາວ ແລະ ສະພາປະຊາຊົນແຫ່ງຊາດອານເຊຣີ ໄດ້ມີການແລກປ່ຽນສານຊົມເຊີຍ ແລະ ສານອວຍພອນໃນໂອກາດວັນສໍາຄັນຕ່າງໆຂອງ 2 ປະເທດ; ຮ່ວມມື, ສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນແລະສາກົນເປັນຕົ້ນແມ່ນເວທີໄອປາ, ອາເຊັບ (ASEP ການຮ່ວມມືລະຫວ່າງລັດຖະສະພາອາຊຽນແລະເອີຣົບ), ໄອພີຢູ (IPU ສະຫະພັນລັດຖະສະພາສາກົນ)ແລະອົງການອື່ນໆ. ສອງຝ່າຍຍັງໄດ້ສະເໜີທິດທາງແຜນການພົວພັນຮ່ວມມືກັນໃນຕໍ່ໜ້າ ໂດຍສືບຕໍ່ແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ, ກໍາມາທິການ, ຄະນະເລຂາທິການ ແລະ ຄະນະມິດຕະພາບລັດຖະສະພາຂອງສອງປະເທດ ທັງຮ່ວມກັນຈັດກອງປະຊຸມສໍາມະນາ, ທັດສະນະສຶກສາ ແລະ ຈັດກອງປະຊຸມແບບເຊິ່ງໜ້າແລະຜ່ານລະບົບເອເລັກໂຕຣນິກ; ສືບຕໍ່ແລກປ່ຽນຄໍາເຫັນ, ຮ່ວມມື, ຊ່ວຍເຫຼືອ ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ອາລິນ ສຸພົມມະປະດິດ)**

# ຮອງປະທານສະພາແຫ່ງຊາດ ລາວ-ອາກເມນີ ພົບປະ 2 ຝ່າຍ



(ສພຊ) - ວັນເສົາທີ 19 ຕຸລານີ້ ທີ່ຫໍປະຊຸມແຫ່ງຊາດ, ທ່ານຄໍາໃບດໍາລັດຮອງປະທານສະພາແຫ່ງຊາດ ໄດ້ພົບປະກັບທ່ານ ຮາຄ໊ອບ ອາຊາກຢານ (Hakob Arshakyan) ຮອງປະທານສະພາແຫ່ງຊາດ ແຫ່ງສາທາລະນະລັດ ອາກເມນີ ພ້ອມດ້ວຍຄະນະ ໃນໂອກາດທີ່ມາເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 (AIPA-45).

ໃນການພົບປະ,ສອງຝ່າຍໄດ້ພ້ອມກັນຕີລາຄາຄືນການພົວພັນ ແລະ ຮ່ວມມືທີ່ດີນໍາກັນລະຫວ່າງສະພາແຫ່ງຊາດລາວ ແລະ ອາກເມນີ ເຖິງວ່າຍັງບໍ່ມີການພົວພັນກັນຫຼາຍ ແຕ່ສອງຝ່າຍກໍໄດ້ມີໂອກາດພົບປະເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ; ມີການແລກປ່ຽນສານຊົມເຊີຍ, ສານອວຍພອນໃນໂອກາດວັນສໍາຄັນຕ່າງໆ ຂອງ 2 ປະເທດ. ໃນໄລຍະຜ່ານມາ, ສອງອົງການນິຕິບັນຍັດຍັງບໍ່ທັນມີການແລກປ່ຽນຄະນະຜູ້ແທນນໍາກັນເທື່ອ, ຈຶ່ງສະເໜີສອງສະພາແຫ່ງຊາດ ຊຸກຍູ້ໃຫ້ມີການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ, ຂັ້ນກໍາມາທິການ ແລະ ຄະນະມິດຕະພາບລັດຖະສະພາຂອງສອງປະເທດໃຫ້ເປັນປົກກະຕິນໍາກັນ; ຊຸກຍູ້ ແລະສົ່ງເສີມໃຫ້ລັດຖະບານຂອງສອງປະເທດ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດການຕົກລົງເຫັນດີນໍາກັນໃຫ້ມີປະສິດທິຜົນດີຂຶ້ນກວ່າເກົ່າ; ສືບຕໍ່ຮ່ວມມື, ຊ່ວຍເຫຼືອ ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ສປປລາວ ແລະ ສ.ອາກເມນີ ໄດ້ສ້າງຕັ້ງສາຍພົວພັນການທູດນໍາກັນໃນວັນທີ 21 ເມສາ 1998.

**(ນາງ ອາລິນ ສຸພົມມະປະດິດ)**

# ກອງປະຊຸມກໍາມາທິການເສດຖະກິດ




(ສພຊ) - ຕອນເຊົ້າວັນທີ 20 ຕຸລາ 2024 ທີ່ຫໍປະຊຸມແຫ່ງຊາດ ໄດ້ມີກອງປະຊຸມກໍາມາທິການເສດຖະກິດ ທີ່ຈັດຂຶ້ນໃນລະຫວ່າງກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ45 ໂດຍການເປັນປະທານຂອງທ່ານ ປອ. ລີເບີ ລີບົວປາວ ປະທານກໍາມາທິການແຜນການ, ການເງິນ ແລະ ການກວດສອບ ເຊິ່ງມີສະມາຊິກລັດຖະສະພາຈາກບັນດາປະເທດສະມາຊິກອາຊຽນເຂົ້າຮ່ວມ.

ກອງປະຊຸມໄດ້ຮ່ວມກັນຄົ້ນຄວ້າ, ປຶກສາຫາລື ແລະ ພິຈາລະນາຮ່າງມະຕິຈໍານວນ 8 ສະບັບ ໃນຂົງເຂດວຽກງານເສດຖະກິດຄື: 1. ຮ່າງມະຕິວ່າດ້ວຍການເສີມສ້າງຄວາມສາມາດໃນການຮັບມືໄຊເບີ ຜ່ານການຮ່ວມມືຂອງລັດຖະສະພາອາຊຽນ ກ້າວໄປສູ່ເສດຖະກິດດີຈີຕອນທີ່ປອດໄພ ແລະ ມີຊີວິດຊີວາ; 2. ຮ່າງມະຕິວ່າດ້ວຍບົດບາດຂອງລັດຖະສະພາໃນການສະໜັບສະໜູນການປະຕິບັດຄໍາແນະນໍາຂອງອາຊຽນ ໃນການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບໃນຂະແໜງການກະສິກໍາ, ອາຫານ ແລະ ປ່າໄມ້; 3. ຮ່າງມະຕິວ່າດ້ວຍບົດບາດຂອງລັດຖະສະພາໃນການສົ່ງ ເສີມການລະດົມທຶນເພື່ອພັດທະນາການເຊື່ອມຈອດພື້ນຖານໂຄງລ່າງຂອງພາກພື້ນແນໃສ່ບັນລຸແຜນແມ່ບົດການເຊື່ອມຈອດອາຊຽນ ໃນປີ2025 ແລະ ໃນຕໍ່ໜ້າ; 4. ຮ່າງມະຕິວ່າດ້ວຍບົດບາດລັດຖະສະພາໃນການຊຸກຍູ້ການເຊື່ອມໂຍງທາງດ້ານເຕັກໂນໂລຊີດີຈີຕອນອາຊຽນ ກ້າວໄປສູ່ການບັນລຸແຜນແມ່ບົດວ່າດ້ວຍການເຊື່ອມຈອດອາຊຽນ 2025 ແລະ ໃນຕໍ່ໜ້າ; 5. ຮ່າງມະຕິວ່າດ້ວຍການເສີມຂະຫຍາຍສ້າງລະບົບການຄ້າກາກບອນຂອງອາຊຽນເພື່ອເຕີບໂຕແບບຍືນຍົງ ແລະ ຄວາມຍືດຢຸ່ນທາງດ້ານສິ່ງແວດລ້ອມ ໃຫ້ເປັນອັນໜຶ່ງອັນດຽວກັນ; 6. ຮ່າງມະຕິວ່າດ້ວຍການໝູນໃຊ້ທ່າແຮງທາງດ້ານການທ່ອງທ່ຽວເຂົ້າໃນການຟື້ນຟູເສດຖະກິດຂອງອາຊຽນໃຫ້ມີຄວາມຍືນຍົງ; 7. ຮ່າງມະຕິວ່າດ້ວຍການຍົກລະດັບຂີດຄວາມສາມາດຂອງສະຖາບັນເພື່ອເຊື່ອມຈອດດ້ານການຂົນສົ່ງ, ການບິນ ແລະ ທ່າເຮືອທາງທະເລຢູ່ໃນພາກພື້ນອາຊຽນ; 8. ຮ່າງມະຕິວ່າດ້ວຍການສ້າງຕັ້ງສູນຄົ້ນຄວ້າປັນຍາປະດິດຂອງອາຊຽນ.

**(ກົງທະນູຄໍາ ພິພັດເສລີ)**

# ກໍາມາທິການວຽກງານສັງຄົມ ພິຈາລະນາ 5 ຮ່າງມະຕິ



(ສພຊ) - ວັນອາທິດທີ 20 ຕຸລານີ້ ໄດ້ມີກອງປະຊຸມກໍາມາທິການສັງຄົມ ຂອງກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນຄັ້ງທີ45 ໂດຍການເປັນປະທານຂອງທ່ານ ບຸນຕາ ເທບພະວົງ ປະທານກໍາມາທິການວັດທະນະທໍາ-ສັງຄົມ, ເຂົ້າຮ່ວມມີຫົວໜ້າ ແລະ ຮອງຫົວໜ້າຄະນະຜູ້ແທນສະມາຊິກລັດຖະສະພາອາຊຽນ.

ກອງປະຊຸມໄດ້ປຶກສາຫາລື, ພິຈາລະນາແລະຮັບຮອງເອົາ 5 ຮ່າງມະຕິຄື: 1. ຮ່າງມະຕິວ່າດ້ວຍການເພີ່ມທະວີບົດບາດຂອງລັດຖະສະພາໃນການຮ່ວມມືເພື່ອການແກ້ໄຂບັນຫາຢາເສບຕິດ ເຮັດໃຫ້ອາຊຽນປອດຢາເສບຕິດຢ່າງເປັນຮູບປະທໍາ; 2. ຮ່າງມະຕິວ່າດ້ວຍການດໍາເນີນການຮ່ວມກັນຜ່ານຂໍ້ລິເລີ່ມສົນທິສັນຍາໂລກວ່າດ້ວຍພລາສຕິກໃນອາຊຽນ;3.ຮ່າງມະຕິວ່າດ້ວຍການສົ່ງເສີມບົດບາດຂອງລັດຖະສະພາດ້ານນະວັດຕະກໍາການຮັກສາສຸຂະພາບແບບອັດສະລິຍະ; 4. ຮ່າງມະຕິວ່າດ້ວຍການສົ່ງເສີມສິດ, ສະຫວັດດີການສັງຄົມແລະໂອກາດໃນການຈ້າງງານ ສໍາລັບຜູ້ອາຍຸສູງໃນອາຊຽນ; 5. ຮ່າງມະຕິວ່າດ້ວຍການເພີ່ມທະວີການຮ່ວມມືໃນການເພີ່ມການຄວບຄຸມຢາສູບ ແລະ ສານນິໂຄຕິນໃນອາຊຽນ.

**(ນາງ ອາລິນ ສຸພົມມະປະດິດ)**

# ສະຫາຍ ສົມມາດ ພົລເສນາ ພົບປະ ສະມາຊິກສະພາຜູ້ແທນປະຊາຊົນທົ່ວປະເທດຈີນ



(ສພຊ)-ເພື່ອເປັນການປະກອບສ່ວນຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ໃຫ້ນັບມື້ເປັນຮູບປະທຳ ແລະ ນຳເອົາຜົນປະໂຫຍດສູງສຸດມາສູ່ປະຊາຊົນສອງຊາດ; ຕອນແລງວັນທີ 21 ຕຸລາຜ່ານມາ, ສະຫາຍ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າພົບປະຂອງສະຫາຍ ຈຽງ ເສິງຮວາ (JIANG Chenghua) ກຳມະການກຳມາທິການການຕ່າງປະເທດ, ສະມາຊິກສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ45 ທີ່ສປປລາວ ເປັນເຈົ້າພາບ.

ໃນການພົບປະ, ສອງຝ່າຍໄດ້ແຈ້ງສະພາບການທີ່ພົ້ນເດັ່ນຂອງປະເທດ ແລະ ການເຄື່ອນໄຫວວຽກງານຂອງອົງການນິຕິບັນຍັດ ໃຫ້ກັນ ແລະ ກັນຊາບ ໂດຍຫຍໍ້ ພ້ອມທັງຮ່ວມກັນຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ທີ່ເປັນມູນເຊື້ອອັນດີງາມມາແຕ່ດົນນານ ແລະ ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ແລະ ເປັນຮູບປະທຳ ເຊິ່ງສອງຝ່າຍໄດ້ຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງການຮ່ວມມືລະຫວ່າງສອງອົງການນິຕິບັນຍັດໃນລະດັບສູນກາງ ແລະ ທ້ອງຖິ່ນ ສະແດງອອກມີການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆ; ແລກປ່ຽນບົດຮຽນ, ຮ່ວມກັນຈັດສຳມະນາ ແລະ ເຝິກອົບຮົມ, ທັດສະນະສຶກສາ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດຂອງສອງອົງການນິຕິບັນຍັດ; ສອງຝ່າຍຍັງໄດ້ສະໜັບສະໜູນເຊິ່ງກັນ ແລະ ກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນ AIPA, IPU, ASEP, APPF. ພິເສດ, ເດືອນກັນຍາ 2023 ໃນໂອກາດທີ່ສະຫາຍປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄປຢ້ຽມຢາມ ສປຈີນ ຢ່າງເປັນທາງການ, ສອງຝ່າຍກໍໄດ້ລົງນາມຂໍ້ຕົກລົງວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ເຊິ່ງເປັນນິຕິກຳສະບັບທຳອິດຂອງສອງອົງການນິຕິບັນຍັດ.

ສອງຝ່າຍຍັງໄດ້ສະເໜີໃຫ້ຊຸກຍູ້ສືບຕໍ່ຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໂດຍສະເພາະສືບຕໍ່ແລກປ່ຽນຄະນະຜູ້ແທນຂັ້ນສູງ, ຂັ້ນກຳມາທິການ, ຄະນະເລຂາທິການ, ຄະນະມິດຕະພາບລັດຖະສະພາ ແລະ ຂັ້ນວິຊາການ ທີ່ຕິດພັນກັບແລກປ່ຽນບົດຮຽນ ແລະ ປະສົບການກ່ຽວກັບການປະຕິບັດພາລະບົດບາດ ນິຕິບັນຍັດ ທັງໃຫ້ການຊ່ວຍເຫຼືອ ແລະ ພັດທະນາຊັບພະຍາກອນມະນຸດໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຂອງ ສປປລາວ; ຊຸກຍູ້ ແລະ ສົ່ງເສີມໃຫ້ລັດຖະບານຂອງສອງປະເທດ ຈັດຕັ້ງປະຕິບັດບັນດາຂໍ້ຕົກລົງສັນຍາ, ອະນຸສັນຍາ ແລະ ບົດບັນທຶກຄວາມເຂົ້າໃຈຕ່າງໆທີ່ສອງຝ່າຍໄດ້ລົງນາມຮ່ວມກັນໃຫ້ເປັນຮູບປະທຳ; ຮ່ວມມື, ສະໜັບສະໜູນ, ຊ່ວຍເຫຼືອ, ປະສານສົມທົບກັນໃນການເຄື່ອນໄຫວວຽກງານຕ່າງໆໃນເວທີພາກພື້ນ ແລະ ສາກົນ.

**(ນາງ ອາລິນ ສຸພົມມະປະດິດ)**

# ພທ. ສຸວອນ ເລືອງບຸນມີ ພົບປະ ຮອງປະທານສະພາຜູ້ແທນລາດສະດອນບາເຣນ



(ສພຊ) - ຕອນເຊົ້າວັນທີ 19 ຕຸລານີ້ ທີ່ຫໍປະຊຸມແຫ່ງຊາດ, ທ່ານ ພທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ພົບປະ ແລະ ເຮັດວຽກກັບທ່ານ ອາມັດ ອັບດຸນວາຮິດ ກາຣາຕາ (Ahmed Abdulwahid Qarata) ຮອງປະທານສະພາຜູ້ແທນລາດສະດອນ ແຫ່ງ ລາຊະອານາຈັກບາເຣນ ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນຄັ້ງທີ45(AIPA-45).

ໃນການພົບປະ, ສອງຝ່າຍໄດ້ພ້ອມກັນຕີລາຄາຄືນການພົວພັນຮ່ວມມືທີ່ດີນຳກັນຢ່າງປົກກະຕິລະຫວ່າງສະພາແຫ່ງຊາດລາວ ກັບ ສະພາຜູ້ແທນລາດສະດອນບາເຣນ ເຊິ່ງມີການພົບປະກັນໃນໂອກາດເຂົ້າຮ່ວມກອງປະຊຸມສາກົນ, ແລກປ່ຽນສານຊົມເຊີຍ ແລະ ສານອວຍພອນໃນໂອກາດວັນສຳຄັນຕ່າງໆຂອງສອງປະເທດ; ສອງຝ່າຍຮ່ວມມືນຳກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນເວທີ AIPA, ASEP, IPU ແລະ ອົງການອື່ນໆ. ໄລຍະຜ່ານມາ, ສອງອົງການນິຕິບັນຍັດຍັງບໍ່ທັນມີການແລກປ່ຽນຄະນະຜູ້ແທນນຳກັນເທື່ອ ຈຶ່ງສະເໜີຊຸກຍູ້ໃຫ້ມີການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ, ກຳມາທິການ, ຄະນະເລຂາທິການ ແລະ ຄະນະມິດຕະພາບລັດຖະສະພາຂອງສອງປະເທດ ຢ່າງປົກກະຕິນຳກັນ; ຊຸກຍູ້ ແລະ ສົ່ງເສີມໃຫ້ລັດຖະບານຂອງສອງປະເທດເອົາໃຈໃສ່ຈັດຕັ້ງປະຕິບັດການຕົກລົງເຫັນດີນຳກັນໃຫ້ມີປະສິດທິຜົນດີ; ສືບຕໍ່ຮ່ວມມື, ຊ່ວຍເຫຼືອ ແລະສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ສປປລາວ ແລະ ລາຊະອານາຈັກບາເຣນ ສ້າງຕັ້ງສາຍພົວພັນການທູດນຳກັນໃນວັນທີ 15 ທັນວາ 2002.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ປະທານກຳມາທິການການຕ່າງປະເທດ ພົບປະ ຫົວໜ້າຄະນະຜູ້ສັງເກດການລັດຖະສະພານອກແວ



(ສພຊ)-ເພື່ອເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍການພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງ ສປປລາວ ແລະ ລາຊະອານາຈັກນອກແວ ໃຫ້ໄດ້ຮັບການພັດທະນາ ແລະ ເສີມຂະຫຍາຍຢ່າງບໍ່ຢຸດຢັ້ງ ເວົ້າລວມ, ເວົ້າສະເພາະແມ່ນລະຫວ່າງສອງອົງການນິຕິບັນຍັດຂອງ 2 ປະເທດ; ຕອນເຊົ້າວັນທີ 19 ຕຸລາ 2024 ທີ່ຫໍປະຊຸມແຫ່ງຊາດ, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ປະທານຄະນະມິດຕະພາບລັດຖະສະພາລາວ-ອີຢູພ້ອມດ້ວຍຄະນະ ໄດ້ພົບປະ ແລະ ເຮັດວຽກຮ່ວມກັບທ່ານ ນາງ ອາສະລາກ ເຊັມ-ຈາຄັອບເຊັນ (Aslaug Sem-Jacobsen) ສະມາຊິກລັດຖະສະພາແຫ່ງລາຊະອານາຈັກນອກແວ ໃນໂອກາດທີ່ນຳພາຄະນະຜູ້ແທນເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ ຄັ້ງທີ45 ທີ່ ສປປລາວ ເປັນເຈົ້າພາບ.

ສປປລາວ ແລະ ລາຊະອານາຈັກນອກແວ ໄດ້ສ້າງຕັ້ງສາຍພົວພັນການທູດນຳກັນໃນວັນທີ 12 ພະຈິກ 1991, ສະພາແຫ່ງຊາດລາວ ແລະ ລັດຖະສະພານອກແວ ກໍມີການພົວພັນຮ່ວມມືນຳກັນຢ່າງປົກກະຕິ ເຊິ່ງມີການພົບປະໃນໂອກາດເຂົ້າຮ່ວມກອງປະຊຸມສາກົນ, ມີການແລກປ່ຽນສານຊົມເຊີຍ ແລະ ສານອວຍພອນໃນໂອກາດວັນສຳຄັນຕ່າງໆຂອງ 2 ປະເທດ, ສອງຝ່າຍຮ່ວມມືນຳກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນເວທີ AIPA, ASEP, IPU ແລະ ອົງການອື່ນໆ; ປີ 1998 ອະດີດປະທານສະພາແຫ່ງຊາດລາວ ໄດ້ຢ້ຽມຢາມປະເທດນອກແວ, ສອງອົງການນິຕິບັນຍັດ ກໍບໍ່ໄດ້ມີການແລກປ່ຽນຄະນະຜູ້ແທນນຳກັນເທື່ອ. ສະນັ້ນ, ໃນການພົບປະ, ສອງຝ່າຍຈຶ່ງສະເໜີຊຸກຍູ້ໃຫ້ສອງອົງການນິຕິບັນຍັດລາວ-ນອກແວ ມີການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ, ກຳມາທິການ, ຄະນະເລຂາທິການ ແລະ ຄະນະມິດຕະພາບລັດຖະສະພາຂອງສອງປະເທດເປັນປົກກະຕິນຳກັນ; ຊຸກຍູ້ແລະສົ່ງເສີມໃຫ້ລັດຖະບານຂອງສອງປະເທດເອົາໃຈໃສ່ຈັດຕັ້ງປະຕິບັດການຕົກລົງເຫັນດີນຳກັນໃຫ້ມີປະສິດທິຜົນດີ; ສືບຕໍ່ຮ່ວມມື, ຊ່ວຍເຫຼືອ ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ກອງປະຊຸມກຳມາທິການການເມືອງ



(ສພຊ) - ໃນຕອນເຊົ້າຂອງວັນທີ 20 ຕຸລາ 2024, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ໄດ້ເປັນປະທານກອງປະຊຸມກຳມາທິການວຽກງານການເມືອງ ທີ່ຈັດຂຶ້ນໃນລະຫວ່າງກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45. ໃນກອງປະຊຸມມີສະມາຊິກລັດຖະສະພາຈາກບັນດາປະເທດສະມາຊິກອາຊຽນເຂົ້າຮ່ວມ ເຊິ່ງໄດ້ຮ່ວມກັນຄົ້ນຄວ້າ, ປຶກສາຫາລື ແລະ ພິຈາລະນາຮ່າງມະຕິຈຳນວນ 4 ສະບັບ ໃນຂົງເຂດວຽກງານການເມືອງຄື: 1) ຮ່າງມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຜົນຂອງກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ແລະ ໄອປາ ຄັ້ງທີ 13 ທີ່ຈັດຂຶ້ນໃນລະຫວ່າງກອງປະຊຸມສຸດຍອດອາ

ອ່ານຕໍ່ໜ້າ 10

## ກອງປະຊຸມກຳມາທິການວຽກງານຈັດຕັ້ງພາຍໃນໄອປາ




(ສພຊ) - ກອງປະຊຸມກຳມາທິການວຽກງານຈັດຕັ້ງພາຍໃນໄອປາຂອງກອງປະຊຸມສະມັດຊາໃຫຍ່ AIPA ຄັ້ງທີ 45 ໄດ້ຈັດຂຶ້ນໃນວັນທີ 20 ຕຸລາ2024 ທີ່ຫໍປະຊຸມແຫ່ງຊາດ ໂດຍການເປັນປະທານຂອງທ່ານນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ, ເຂົ້າຮ່ວມມີສະມາຊິກລັດຖະສະພາຈາກບັນດາປະເທດສະມາຊິກອາຊຽນ.

ກອງປະຊຸມຄັ້ງນີ້ ໄດ້ຮ່ວມກັນຄົ້ນຄວ້າ, ປຶກສາຫາລື ແລະ ພິຈາລະນາຮ່າງມະຕິ 16 ສະບັບໃນຂົງເຂດວຽກງານຈັດຕັ້ງພາຍໃນໄອປາຄື: 1.ຮ່າງມະຕິວ່າດ້ວຍບົດລາຍງານການກວດສອບການເງິນ ສົກປີ 2023-2024; 2. ຮ່າງມະຕິວ່າດ້ວຍແຜນສະເໜີງົບປະມານຂອງກອງເລຂາໄອປາ ໄລຍະວັນທີ 1 ສິງຫາ 2024ຫາ31ກໍລະກົດ2025; 3.ຮ່າງມະຕິວ່າດ້ວຍການຈັດສັນເງິນພັນທະໃນການປະກອບສ່ວນຂອງລັດຖະສະພາສັງເກດການໄອປາ; 4. ຮ່າງມະຕິວ່າດ້ວຍການປັບປຸງທຳມະນູນໄອປາ; 5. ຮ່າງມະຕິວ່າດ້ວຍການຮັບຮອງເອົາຄຳແນະນຳ ແລະ ຂັ້ນຕອນການພົວພັນລະຫວ່າງໄອປາ ກັບພາກສ່ວນພາຍນອກ; 6. ຮ່າງມະຕິວ່າດ້ວຍການຮັບຮອງເອົາລະບຽບເງື່ອນໄຂ (ToR) ແລະ ຂອບແນວຄວາມຄິດ (Concept Note) ກ່ຽວກັບຫໍສະໝຸດກົດໝາຍດິຈິຕອລໄອປາ (AIPA-lync); 7. ຮ່າງມະຕິວ່າດ້ວຍການສະເໜີບົດບັນທຶກຄວາມເຂົ້າໃຈລະຫວ່າງໄອປາ ກັບ ອົງການລັດຖະສະພາສາກົນ/ສະມາຄົມ; 8. ຮ່າງມະຕິວ່າດ້ວຍການສະເໜີບົດບັນທຶກຄວາມເຂົ້າໃຈລະຫວ່າງໄອປາ ກັບ ຄູ່ຮ່ວມມືພັດທະນາ;9.ຮ່າງມະຕິວ່າດ້ວຍການຮັບຮອງເອົາສະພາແຫ່ງຊາດລາຊະອານາຈັກບາເຣນ ເຂົ້າເປັນຜູ້ສັງເກດການຂອງໄອປາ; 10. ຮ່າງມະຕິວ່າດ້ວຍການຮັບຮອງເອົາສະພາແຫ່ງຊາດບຸນເດດສະຕາກ (Bundestag) ຂອງສາທາລະນະລັດ ສະຫະພັນ ເຢຍລະມັນເຂົ້າເປັນຜູ້ສັງເກດການຂອງໄອປາ; 11. ຮ່າງມະຕິວ່າດ້ວຍການມອບລາງວັນຜູ້ທີ່ ມີຜົນງານດີເດັ່ນຕໍ່ໄອປາ ໃຫ້ແກ່ທ່ານ ເປຮິນ ດາໂຕະ ຮາຈິ ຈູດິນ ຮາຈິ ອາຊາ ຈາກບຣູໄນດາຣູຊາລາມ; 12.ຮ່າງມະຕິວ່າດ້ວຍການມອບລາງວັນຜູ້ທີ່ມີຜົນງານດີເດັ່ນຕໍ່ໄອປາ ໃຫ້ແກ່ທ່ານ ຣູສະຣີ ຈາກລາຊະອານາຈັກກຳປູເຈຍ; 13. ຮ່າງມະຕິວ່າດ້ວຍການມອບລາງວັນຜູ້ທີ່ມີຜົນງານດີເດັ່ນຕໍ່ໄອປາ ໃຫ້ແກ່ທ່ານ ສຈ. ນາງ ການຈະນາລັດ ຣິວິໂຣຈະນາ ຈາກລາຊະອານາຈັກໄທ; 14. ຮ່າງມະຕິວ່າດ້ວຍການສະແດງຄວາມຊົມເຊີຍການບໍລິຫານງານຂອງທ່ານປອ. ໄຊສົມພອນ ພົມວິຫານ ປະທານໄອປາ; 15. ຮ່າງມະຕິວ່າດ້ວຍການສະແດງຄວາມຊົມເຊີຍ ແລະ ຂອບໃຈຕໍ່ລັດຖະບານຟີລິບປິນທີ່ໄດ້ສະໝັກໃຈປະກອບສ່ວນງົບປະມານ ຈຳນວນ 20,000 ໂດລາສະຫະລັດ ໃຫ້ໄອປາ ໃນປີ2024; 16.ຮ່າງມະຕິວ່າດ້ວຍວັນທີ ແລະ ສະຖານທີ່ ຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະ ພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 46.

**(ກົງທະນູຄຳ ພິພັດເສລີ)**

## ມອບ-ຮັບເງິນຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ




(ສພຊ) - ຕອນບ່າຍວັນທີ 23 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານນາງອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ໄດ້ຮັບເງິນຊ່ວຍເຫຼືອຈາກບໍລິສັດ ໄຟຟ້ານ້ຳເງີນ 1 ຈຳກັດຜູ້ດຽວ ຈຳນວນ 30 ລ້ານກີບ ເພື່ອນຳໄປຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມຢູ່ແຂວງຫົວພັນ, ໂດຍການກ່າວມອບຂອງທ່ານ ເຜັດສະໝອນ ຫຼວງອາໄພ ຜູ້ຈັດການຝ່າຍເຕັກນິກບໍລິສັດດັ່ງກ່າວເຊິ່ງມີທ່ານທັນຕາກອງຜາລີຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ພ້ອມດ້ວຍພະນັກງານຈາກສອງພາກສ່ວນເຂົ້າຮ່ວມ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ສະແດງຄວາມຂອບໃຈ ແລະ ມອບໃບຍ້ອງຍໍຂອງຄະນະເລຂາທິການສະພາແຫ່ງຊາດ ໃຫ້ບໍລິສັດໄຟຟ້ານ້ຳເງີນ 1 ຈຳກັດຜູ້ດຽວ ເພື່ອເປັນການສັນລະເສີນຜົນງານ ແລະ ຄຸນງາມຄວາມດີຢ່າງສົມກຽດ.

**(ນາງ ກຸກກິກ ບຸດດາໄຊ)**

## ສອງປະທານກຳມາທິການວຽກງານການຕ່າງປະເທດ ລາວ-ອູແກຣນ ພົບປະກັນຄັ້ງທຳອິດ




(ສພຊ) - ຕອນບ່າຍວັນທີ 20 ຕຸລານີ້ ທີ່ຫໍປະຊຸມແຫ່ງຊາດ, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະ ໄດ້ເຮັດວຽກຮ່ວມກັບທ່ານ ໂອເລັກຊານເດີ ເມເຣຈໂກ (Oleksandr Merezhko) ປະທານກຳມາທິການນະໂຍບາຍຕ່າງປະເທດ ແລະ ຮ່ວມມືລັດຖະສະພາສາກົນ, ລັດຖະສະພາອູແກຣນ; ໂອກາດນີ້, ທ່ານ ສັນຍາ ປຣະເສີດ ໄດ້ສະແດງຄວາມປິຕິຍິນດີທີ່ໄດ້ມີໂອກາດພົບປະກັບທ່ານ ໂອເລັກຊານເດີ ເມເຣຈໂກ ໃນໂອກາດທີ່ນຳພາຄະນະຜູ້ແທນເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ໃນຖານະເປັນຜູ້ສັງເກດການໄອປາ ຕາມການເຊື້ອເຊີນຂອງສະພາແຫ່ງຊາດລາວ ທີ່ເປັນເຈົ້າພາບຈັດກອງປະຊຸມດັ່ງກ່າວ.

ການພົບປະໃນຄັ້ງນີ້ ເປັນການພົບປະຄັ້ງທຳອິດລະຫວ່າງສອງປະທານກຳມາທິການວຽກງານການຕ່າງປະເທດຂອງສອງອົງການນິຕິບັນຍັດ ເຊິ່ງເປັນການປະກອບສ່ວນເຂົ້າໃນການພັດທະນາສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ ລາວ-ອູແກຣນ.

ສປປລາວ ແລະ ອູແກຣນ ໄດ້ສ້າງຕັ້ງສາຍພົວພັນການທູດນຳກັນ ໃນວັນທີ 17 ກັນຍາ 1992 ນັບແຕ່ນັ້ນມາ, ສອງປະເທດໄດ້ມີການພົວພັນນຳກັນມາຕະຫຼອດ; ສຳລັບການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາອູແກຣນ, ໃນໄລຍະຜ່ານມາ ເຖິງວ່າຍັງບໍ່ທັນມີການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນຂັ້ນຕ່າງໆ, ແຕ່ສອງອົງການນິຕິບັນຍັດ ກໍມີການພົບປະກັນໃນໂອກາດເຂົ້າຮ່ວມກອງປະຊຸມຂອງລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນໃນຂອບຂອງ AIPA, IPU ແລະ ເວທີປຶກສາຫາລືລັດຖະສະພາອື່ນໆ ເຊິ່ງສອງຝ່າຍຫວັງວ່າໃນຕໍ່ໜ້າ ຈະມີການພົວພັນເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດ, ເພື່ອສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາແບບຍືນຍົງ.

**(ນາງ ສຸພາວັນ ທອມສະນິດ)**

## ປະທານກຳມາທິການກົດໝາຍ ພົບປະ ສະມາຊິກສະພາແຫ່ງຊາດອາແຊກໄບຊານ



(ສພຊ) - ຕອນແລງວັນເສົາທີ 19 ຕຸລາຜ່ານມາ ທີ່ຫໍປະຊຸມແຫ່ງຊາດ, ທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ ພ້ອມດ້ວຍຄະນະ ໄດ້ພົບປະທ່ານ ຊົວ ຣາມິສ ໂອກລູ ຊູກູຣອບ (Zaur Ramiz Oglu SHUKUROV) ສະມາຊິກສະພາແຫ່ງຊາດ ແຫ່ງ ສາທາລະນະລັດອາແຊກໄບຊານ ໃນໂອກາດທີ່ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ ຄັ້ງທີ 45 ທີ່ ສປປລາວ ເປັນເຈົ້າພາບ.

ການພົບປະຄັ້ງນີ້ ສອງຝ່າຍໄດ້ປຶກສາຫາລືກັນເພື່ອຊຸກຍູ້ເພີ່ມທະວີສາຍພົວພັນມິດຕະພາບແລະການຮ່ວມມືລະຫວ່າງສອງປະເທດກໍຄືສອງອົງການນິຕິບັນຍັດລາວ-ອາແຊກໄບຊານ ໃຫ້ນັບມື້ນັບຂະຫຍາຍຕົວຍິ່ງໆຂຶ້ນ; ນັບແຕ່ ສປປລາວ ແລະ ສ.ອາແຊກໄບຊານສ້າງຕັ້ງສາຍພົວພັນການທູດນຳກັນໃນວັນທີ 22 ພຶດສະພາ 1995 ເປັນຕົ້ນມາ, ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດອາແຊກໄບຊານ ໄດ້ມີການພົວພັນ ແລະ ຮ່ວມມືທີ່ດີນຳກັນ ເຖິງແມ່ນວ່າຍັງບໍ່ທັນມີການແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆນຳກັນເທົ່າທີ່ຄວນ ແຕ່ກໍໄດ້ມີການແລກປ່ຽນຂໍ້ມູນຂ່າວສານ, ສົ່ງສານອວຍພອນ ແລະ ສານຊົມເຊີຍໃນໂອກາດວັນສຳຄັນຕ່າງໆແລະມີການພົບປະກັນໃນໂອກາດກອງປະຊຸມລັດຖະສະພາລະດັບພາກພື້ນແລະສາກົນ. ສອງຝ່າຍໄດ້ສະເໜີບາງທິດທາງແຜນການພົວພັນ ແລະ ຮ່ວມມືໃນຕໍ່ໜ້າເປັນຕົ້ນແລກປ່ຽນຄະນະຜູ້ແທນທີ່ຕິດພັນກັບການແລກປ່ຽນປະສົບການທີ່ດີໃນການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ ແລະ ບັນຫາອື່ນໆທີ່ມີຄວາມສົນໃຈຮ່ວມກັນ; ແລກປ່ຽນໄປມາຫາສູ່ລະຫວ່າງປະຊາຊົນດ້ວຍກັນ, ໂຄສະນາເຜີຍ ແຜ່ຂໍ້ມູນຂ່າວສານ ແລະ ທ່າແຮງຂອງປະເທດຕົນ; ສືບຕໍ່ໃຫ້ການສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ກຸກກິກ ບຸດດາໄຊ)**

# ສຳມະນາວິທະຍາສາດນະໂຍບາຍການອະນຸລັກ ແລະ ຫຼຸດຜ່ອນຜົນກະທົບຕໍ່ຊີວະນາໆພັນ




(ສພຊ) - ກອງປະຊຸມສຳມະນາວິທະຍາສາດກ່ຽວກັບວຽກງານນະໂຍບາຍການອະນຸລັກ ແລະ ການຫຼຸດ ຜ່ອນຜົນກະທົບຕໍ່ຊີວະນາໆພັນຢູ່ສປປລາວ ໄດ້ຈັດຂຶ້ນເມື່ອວັນທີ 24 ຕຸລາຜ່ານມາທີ່ສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຮ່ວມຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີແລະສິ່ງແວດລ້ອມ (ກສຕສ) ແລະ ທ່ານ ສັນຕິ ໄຊປັນຍາຫົວໜ້າອົງການອະນຸລັກສັດປ່າ ປະຈຳ ສປປລາວ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການຂອງ ສພຊ, ຮອງລັດຖະມົນຕີຈາກກະຊວງທີ່ກ່ຽວຂ້ອງ, ປະທານສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກສຕສແລະແຂກຖືກເຊີນຈາກພາກສ່ວນຕ່າງໆພ້ອມດ້ວຍບັນດາທ່ານວິທະຍາກອນຈາກກະຊວງກະສິກຳ ແລະ ປ່າໄມ້, ກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ,ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງກັບວຽກ

ອ່ານຕໍ່ໜ້າ 10

# ປະທານຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ພົບປະສະມາຊິກສະພາສູງຍີ່ປຸ່ນ



(ສພຊ) - ຕອນແລງວັນທີ 21 ຕຸລາຜ່ານມາ ທີ່ຫໍປະຊຸມແຫ່ງຊາດ, ທ່ານ ນາງ ທຸມມາລີ ວົງພະຈັນປະທານກຳມາທິການຍຸຕິທຳ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ໄດ້ພົບປະກັບທ່ານ ໂຮຊິ ໂຮກຸໂຕະ (HOSHI Hokuto) ສະມາຊິກສະພາສູງແຫ່ງປະເທດຍີ່ປຸ່ນ ໃນໂອກາດທີ່ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ຢູ່ ສປປລາວ; ທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ຕີລາຄາສູງຕໍ່ການພົບປະຄັ້ງນີ້ ເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະການຮ່ວມມືອັນດີງາມທີ່ມີມາແຕ່ດົນນານ ລະຫວ່າງ ສປປລາວ ແລະ ຍີ່ປຸ່ນ ກໍຄືການເປັນຄູ່ຮ່ວມຍຸດທະສາດ ເຊິ່ງເຫັນວ່າໄດ້ຮັບການເສີມຂະຫຍາຍ ແລະພັດທະນາຢ່າງຕໍ່ເນື່ອງ ເວົ້າລວມ, ເວົ້າສະເພາະ ລະຫວ່າງສອງອົງການນິຕິບັນຍັດ ກໍນັບມື້ນັບໄດ້ຮັບການພັດທະນາຍິ່ງໆຂຶ້ນ.

ສອງຝ່າຍໄດ້ແຈ້ງສະພາບການທີ່ພົ້ນເດັ່ນຂອງປະເທດ ແລະ ວຽກງານຂອງອົງການນິຕິບັນຍັດໃຫ້ກັນ ແລະ ກັນຊາບໂດຍຫຍໍ້ ພ້ອມທັງຕີລາຄາຄືນການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ລາວ-ຍີ່ປຸ່ນ ໃນໄລຍະຜ່ານມາ ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ເຊິ່ງສອງຝ່າຍມີການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆນຳກັນເປັນປົກກະຕິ, ສົ່ງສານສະແດງຄວາມຊົມ ເຊີຍ ແລະ ສານອວຍພອນໃນວັນສຳຄັນຕ່າງໆ, ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ, ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນແລະສາກົນເປັນຕົ້ນສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ, ເວທີລັດຖະສະພາອາຊີ-ປາຊີຟິກ (APPF), ຄູ່ຮ່ວມເຈລະຈາລັດຖະສະພາອາຊີ-ເອີຣົບ (ASEP), ສະຫະພັນລັດຖະສະພາສາກົນ (IPU) ແລະອື່ນໆ. ພິເສດ, ທ່ານ ນາງ ຊືຈິຍະ ຊິນະໂກະ (TSUCHIYA Shinako)ລັດຖະມົນຕີກະຊວງການຟື້ນຟູ, ປະທານຄະນະມິດຕະພາບລັດຖະສະພາ ຍີ່ປຸ່ນ-ລາວ ພ້ອມດ້ວຍຄະນະ ໄດ້ມາຢ້ຽມຢາມ ສປປລາວ ໃນເດືອນມັງກອນ 2024.

ຕໍ່ກັບທິດທາງການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດໃນຕໍ່ໜ້າແມ່ນຈະສືບຕໍ່ແລກປ່ຽນການຢ້ຽມຢາມລະຫວ່າງຄະນະຜູ້ແທນຂັ້ນສູງ, ຂັ້ນກຳມາທິການ ແລະຄະນະມິດຕະພາບລັດຖະສະພາ ຢ່າງປົກກະຕິທີ່ຕິດພັນກັບການແລກປ່ຽນບົດຮຽນ ແລະຂໍ້ມູນຂ່າວສານກ່ຽວກັບການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ; ຮ່ວມກັນຊຸກຍູ້ການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງທີ່ລັດຖະບານຂອງສອງປະເທດໄດ້ລົງນາມຮ່ວມກັນ ໃຫ້ເປັນຮູບປະທຳຂຶ້ນກວ່າເກົ່າ ແລະ ສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການຕ່າງໆຂອງຍີ່ປຸ່ນທີ່ມາລົງທຶນຢູ່ສປປລາວໃຫ້ສຳເລັດຕາມແຜນການ; ຊ່ວຍພັດທະນາຊັບພະຍາກອນມະນຸດແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຂອງສປປລາວ; ຊຸກຍູ້ນັກທຸລະກິດ, ນັກທ່ອງທ່ຽວຍີ່ປຸ່ນ ມາ ສປປລາວ ໃຫ້ຫຼາຍຂຶ້ນກວ່າເກົ່າ.

**(ນາງ ອາລິນ ສຸພົມມະປະດິດ)**

# ສະພາແຫ່ງຊາດລາວ-ສະພາແຫ່ງຊາດຕວັກກີ ພົບປະສອງຝ່າຍ



(ສພຊ) - ວັນທີ 21 ຕຸລາຜ່ານມາ ທີ່ຫໍປະຊຸມແຫ່ງຊາດ, ໄດ້ມີການພົບປະສອງຝ່າຍລະຫວ່າງທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດກັບທ່ານ ອອສມານ ຊາລາມ (OSMAN SAĞLAM) ຫົວໜ້າຄະນະຜູ້ແທນ, ສະມາຊິກສະພາແຫ່ງຊາດແຫ່ງ ສາທາລະນະລັດຕວັກກີ ໃນໂອກາດເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45; ທ່ານ ສຸບັນ ສະວະບຸດ ໄດ້ຕີລາຄາສູງ ຕໍ່ການພົບປະກັນໃນຄັ້ງນີ້ ເຊິ່ງເປັນຄັ້ງທຳອິດ ແລະ ເປັນໂອກາດດີທີ່ຈະໄດ້ປຶກສາຫາລືກ່ຽວ ກັບການຊຸກຍູ້ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສປປລາວ ກັບ ສ.ຕວັກກີ ກໍຄືລະຫວ່າງສອງອົງການນິຕິບັນຍັດ ໃຫ້ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຍິ່ງໆຂຶ້ນ.

ສອງຝ່າຍໄດ້ແຈ້ງສະພາບການທີ່ພົ້ນເດັ່ນຂອງປະເທດ ແລະ ການເຄື່ອນໄຫວວຽກງານອົງການນິຕິບັນຍັດ ໃຫ້ກັນແລະກັນຊາບໂດຍຫຍໍ້ ພ້ອມທັງຕີລາຄາຄືນການພົວພັນຮ່ວມມືລະຫວ່າງສອງປະເທດ ເຊິ່ງ ສປປລາວ ແລະ ສ.ຕວັກກີ ສ້າງຕັ້ງສາຍພົວພັນການທູດນຳກັນ ໄດ້ 66 ປີ (26/6/1958-26/6/2024). ຕໍ່ກັບການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບສະພາແຫ່ງຊາດຕວັກກີ ໄດ້ຮັບການເສີມຂະຫຍາຍເປັນຢ່າງດີ ໂດຍມີການແລກປ່ຽນຄະນະຜູ້ແທນຂັ້ນສູງ, ຂັ້ນກຳມາທິ ການຮ່ວມກັນ; ແລກປ່ຽນສານຊົມເຊີຍໃນໂອກາດວັນສຳຄັນຂອງຊາດ, ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເຊັ່ນ: AIPA, IPU, APPF ເຊິ່ງເປັນການປະກອບສ່ວນສິ່ງເສີມສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອການພັດທະນາຢູ່ໃນພາກພື້ນ ແລະ ສາກົນ.

ສຳລັບທິດທາງການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດໃນຕໍ່ໜ້າ ແມ່ນຈະສືບຕໍ່ຊຸກຍູ້ໃຫ້ມີການແລກປ່ຽນຄະນະຜູ້ແທນນຳກັນໃນລະດັບຕ່າງໆຢ່າງປົກກະຕິ ແລະ ຕໍ່ເນື່ອງ ທັງຊ່ວຍສ້າງຊັບພະຍາກອນມະນຸດ ເປັນຕົ້ນແມ່ນການເຝິກອົບຮົມ, ທັດສະນະສຶກສາແລະແລກປ່ຽນບົດຮຽນນຳກັນ ເພື່ອຍົກສູງຂີດຄວາມສາມາດແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຂອງ ສປປລາວ; ຊຸກຍູ້ ແລະ ສົ່ງເສີມໃຫ້ລັດຖະບານຂອງສອງປະເທດ ສືບຕໍ່ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ, ຂໍ້ຕົກລົງ ແລະ ໂຄງການຮ່ວມມືທີ່ໄດ້ລົງນາມຮ່ວມກັນໃຫ້ເປັນຮູບປະທຳ ແລະ ນຳເອົາຜົນປະໂຫຍດມາສູ່ປະຊາຊົນຢ່າງແທ້ຈິງ; ສືບຕໍ່ແລກປ່ຽນຄຳເຫັນ ແລະ ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ອາລິນ ສຸພົມມະປະດິດ)**

# ປຶກສາຫາລືຮ່າງຖະແຫຼງການຮ່ວມ




(ສພຊ) - ໃນຕອນເຊົ້າຂອງວັນທີ 21 ຕຸລາ 2024, ທ່ານ ຈັນທະວົງ ແສນອາມາດ ມົນຕີຮອງປະທານກຳມາທິການການຕ່າງປະເທດ ໄດ້ເປັນປະທານກອງປະຊຸມຄະນະກຳມະການຮ່າງຖະແຫຼງການຮ່ວມຂອງກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45 ໂດຍມີຄະນະຜູ້ແທນລັດຖະສະພາສະມາຊິກໄອປາ ແລະ ທ່ານເລຂາທິການໃຫຍ່ໄອປາ ເຂົ້າຮ່ວມ; ກອງປະຊຸມໄດ້ຮ່ວມກັນປຶກສາຫາລືແລະເປັນເອກະພາບກັນຕໍ່ກັບຮ່າງຖະແຫຼງການຮ່ວມ ເຊິ່ງເປັນຜົນຂອງກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45 ກ່ອນທີ່ຈະນຳເຂົ້າພິຈາລະນາລົງລາຍເຊັນຮັບຮອງໃນກອງປະຊຸມຄົບຄະນະວາລະສຸດທ້າຍ ໂດຍບັນດາທ່ານປະທານຫຼືຫົວໜ້າຄະນະຜູ້ແທນສະມາຊິກໄອປາ.

**(ກຳມາທິການການຕ່າງປະເທດ)**




## ປິດກອງປະຊຸມ...

(ຕໍ່ຈາກໜ້າ 1)

ຕົ້ນມາ, ວັນທີ 21 ຕຸລານີ້ ທີ່ຫໍປະຊຸມແຫ່ງຊາດ ໄດ້ມີພິທີປິດຢ່າງເປັນທາງການ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ປະທານໄອປາຄັ້ງທີ 45; ເຂົ້າຮ່ວມມີສົມເດັດ, ປະທານສະພາ, ປະທານລັດຖະສະພາຈາກບັນດາປະເທດສະມາຊິກໄອປາແລະປະເທດສັງເກດການ; ເລຂາທິການໃຫຍ່ອາຊຽນແລະເລຂາທິການໃຫຍ່ໄອປາ; ສະມາຊິກລັດຖະສະພາ, ທູຕານຸທູດ, ຕາງໜ້າອົງການຈັດຕັ້ງສາກົນແລະແຂກຖືກເຊີນ.

ໃນພິທີ, ໄດ້ມອບລາງວັນໃຫ້ແກ່ຜູ້ທີ່ມີຜົນງານດີເດັ່ນຕໍ່ໄອປາ, ຮັບຮອງເອົາປະເທດເຢຍລະມັນ ແລະ ບາເຣນ ເປັນລັດຖະສະພາສັງເກດການໄອປາໃໝ່ ແລະ ມອບ-ຮັບຕຳແໜ່ງໃຫ້ແກ່ທ່ານ ໂຈຮາຣີ ບິນ ອັບດຸນ (Johari bin Abdul) ປະທານສະພາຜູ້ແທນລາດສະດອນມາເລເຊຍ ເປັນປະທານໄອປາຜູ້ຕໍ່ໄປ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຂອບໃຈບັນດາທ່ານປະທານລັດຖະສະພາ, ຫົວໜ້າຄະນະຜູ້ແທນ, ສະມາຊິກລັດຖະສະພາ, ຜູ້ຕາງໜ້າບັນດາອົງການຈັດຕັ້ງສາກົນ ແລະ ແຂກຖືກເຊີນ ທີ່ໄດ້ເຂົ້າຮ່ວມຄົ້ນຄວ້າ, ປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນ, ພິຈາລະນາບັນຫາຕ່າງໆດ້ວຍຄວາມຮັບຜິດຊອບສູງ, ສ້າງສັນ, ກົງໄປກົງມາ, ມີວິໄສທັດ ແລະ ດຳເນີນໄປຕາມຫຼັກການຂອງໄອປາເຮັດໃຫ້ກອງປະຊຸມໄອປາຄັ້ງທີ 45 ໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທຸກປະການຢ່າງຈົບງາມ.

ກອງປະຊຸມໄອປາຄັ້ງທີ 45 ໄດ້ປຶກສາຫາລື ແລະ ຕົກລົງຫຼາຍຫົວຂໍ້ສຳຄັນຕາມພາລະບົດບາດ ເພື່ອເປັນການສົ່ງເສີມ ແລະ ຮັດແໜ້ນການຮ່ວມມືໃນຂະແໜງການນິຕິບັນຍັດ ເພື່ອປະກອບສ່ວນເຂົ້າໃນຂະບວນການການສ້າງປະຊາຄົມອາຊຽນໃຫ້ມີຄວາມເຂັ້ມແຂງ ແລະ ນຳເອົາຜົນປະໂຫຍດມາສູ່ປະຊາຊົນ ກໍຄືການປະກອບສ່ວນເຂົ້າໃນພາລະກິດລວມແຫ່ງການປົກປັກຮັກສາ ແລະ ສົ່ງເສີມສັນຕິພາບ, ສະຖຽນລະພາບ ແລະ ຄວາມສົມບູນພູນສຸກຂອງພາກພື້ນ. ບັນດາຍັດຕິທີ່ໄອປາໄດ້ຮັບຮອງເອົາໃນກອງປະຊຸມຄັ້ງນີ້ ກວມເອົາຂົງເຂດການເມືອງ, ເສດຖະກິດ, ສັງຄົມ, ແມ່ຍິງ, ຊາວໜຸ່ມ, ວຽກງານພາຍໃນ, ກອງປະຊຸມລະຫວ່າງອາຊຽນແລະໄອປາເຊິ່ງຈະເປັນເອກະສານພື້ນຖານສຳຄັນສຳລັບການຜັນຂະຫຍາຍຄຳຂວັນສຳລັບການເປັນປະທານໄອປາຄັ້ງທີ45 ຂອງ ສປປລາວ ໃນປີ 2024; ນອກຈາກນີ້, ກໍໄດ້ມີກອງປະຊຸມຮ່ວມລະຫວ່າງໄອປາ ກັບ ລັດຖະສະພາປະເທດສັງເກດການເພື່ອເພີ່ມທະວີການຮ່ວມມື, ການສະໜັບສະໜູນ, ແກ້ໄຂບັນຫາທີ່ເກີດຂຶ້ນ ແນໃສ່ຮັບປະກັນການເຊື່ອມຈອດ ແລະ ການເຕີບໂຕແບບກວມລວມ.

ເພື່ອໃຫ້ຜົນຂອງກອງປະຊຸມໄອປາຄັ້ງນີ້ ໄດ້ຮັບການຈັດຕັ້ງຜັນຂະຫຍາຍໃຫ້ເປັນຮູບປະທຳ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຮຽກຮ້ອງບັນດາສະມາຊິກລັດຖະສະພາລະຫວ່າງຊາດອາຊຽນ, ລັດຖະສະພາປະເທດສັງເກດການ ແລະ ຄູ່ຮ່ວມພັດທະນາໄອປາ ນຳເອົາເນື້ອໃນຈິດໃຈສຳຄັນຂອງບັນດາມະຕິຕ່າງໆ ກໍຄືຄຳຕົກລົງຂອງກອງປະຊຸມໄປເຜີຍແຜ່ແລະເຊື່ອມສານເຂົ້າໃນວຽກງານຂອງຕົນໃຫ້ປາກົດຜົນເປັນຈິງ, ສາມາດປະເມີນໄດ້ ແລະ ມີການລາຍງານຢ່າງເປັນລະບົບ ທັງນີ້, ກໍເພື່ອຍົກສູງບົດບາດຂອງໄອປາໃນການຊຸກຍູ້ສົ່ງເສີມການຈັດຕັ້ງປະຕິບັດວິໄສທັດປະຊາຄົມອາຊຽນ 2025 ກໍຄືການສົ່ງເສີມປະຊາຄົມອາຊຽນໃຫ້ເຂັ້ມແຂງ ແລະເຮັດໃຫ້ເສດຖະກິດອາຊຽນມີຄວາມເຂັ້ມແຂງ, ເປີດກວ້າງ, ປະຊາຄົມມີຄວາມສາມັກຄີປອງດອງ, ມີການພັດທະນາທີ່ເທົ່າທຽມກັນ, ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ ແລະ ພ້ອມກັນກ້າວໄປຂ້າງໜ້າ.

**(ນາງ ອາລິນ ສຸພົມມະປະດິດ)**

## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

(ສພຊ) - ໂດຍຕອບສະໜອງຕາມຄຳເຊື້ອເຊີນຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ທ່ານ ອີກໍ ເຊີເກເຢນໂກ (Igor Sergeyenko) ປະທານສະພາຜູ້ແທນປະຊາຊົນ, ສະພາແຫ່ງຊາດແຫ່ງສາທາລະນະລັດເບລາຣຸດຊີ ພ້ອມດ້ວຍຄະນະ ໄດ້ເດີນທາງມາຢ້ຽມຢາມສາທາລະນະລັດປະຊາທິປະໄຕປະຊາຊົນລາວຢ່າງເປັນທາງການ ໃນລະຫວ່າງວັນທີ 18-20 ຕຸລາ 2024 ແລະ ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ທີ່ສປປລາວ ເປັນເຈົ້າພາບ.

ພິທີຕ້ອນຮັບຢ່າງເປັນທາງການ ໄດ້ຈັດຂຶ້ນໃນຕອນສວາຍວັນທີ 20 ຕຸລາ ທີ່ສະພາແຫ່ງຊາດ ໂດຍການເຂົ້າຮ່ວມຂອງທ່ານ ປອ. ໄຊສົມພອນ ພົມວິຫານ ພ້ອມດ້ວຍຄະນະ, ຫຼັງຈາກນັ້ນ ໄດ້ມີພິທີພົບປະສອງຝ່າຍຢ່າງເປັນທາງການ ເພື່ອຮ່ວມກັນທົບທວນຄືນການພົວພັນຮ່ວມມືສອງຝ່າຍ ພ້ອມທັງກຳນົດທິດທາງການຮ່ວມມືໃນຕໍ່ໜ້າ. ໃນໂອກາດນີ້, ທ່ານ ປອ. ໄຊສົມພອນພົມວິຫານສະແດງຄວາມພາກພູມໃຈຢ່າງຍິ່ງທີ່ໄດ້ຕ້ອນຮັບ ແລະ ພົບປະກັບທ່ານ ອີກໍ ເຊີເກເຢນໂກ ແລະ ຄະນະທີ່ເດີນທາງມາຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45 ຕາມການເຊື້ອເຊີນຂອງສະພາແຫ່ງຊາດລາວ ເຊິ່ງເປັນການພົບປະກັນແບບເຊິ່ງໜ້າຄັ້ງທຳອິດ; ເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ ແລະ ການຮ່ວມມືອັນດີງາມລະຫວ່າງສອງປະເທດ, ເປັນການຈັດຕັ້ງປະຕິບັດບົດບັນທຶກການຮ່ວມມືລະຫວ່າງ 2 ສະພາແຫ່ງຊາດ ລາວ-ເບລາຣຸດຊີ ໃຫ້ນັບມື້ນັບເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳຍິ່ງໆຂຶ້ນ ທັງເປັນການສະໜັບສະໜູນ ແລະ ໃຫ້ກຳລັງໃຈແກ່ສະພາແຫ່ງຊາດລາວ ໃນການເປັນປະທານໄອປາໃນປີ 2024 ກໍຄືເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ລັດຖະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ໃຫ້ສຳເລັດຜົນຢ່າງຈົບງາມ.

ສອງຝ່າຍໄດ້ແຈ້ງສະພາບການທີ່ພົ້ນເດັ່ນຂອງປະເທດ ແລະ ການຈັດຕັ້ງປະຕິ ບັດວຽກງານຂອງອົງການນິຕິບັນຍັດ ໃຫ້ກັນແລະກັນຊາບ ແລະ ຮ່ວມກັນຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງປະເທດໃນຕະຫຼອດໄລຍະຜ່ານມາໄດ້ມີການຂະຫຍາຍຕົວຢ່າງເປັນລຳດັບ. ສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສະພາແຫ່ງ ຊາດ ແຫ່ງ ສ.ເບລາຣຸດຊີ ໄດ້ມີການພົວພັນຮ່ວມມືທີ່ດີນຳກັນມາໂດຍຕະຫຼອດ ເຊິ່ງສະແດງອອກມີການແລກປ່ຽນຄະນະຜູ້ແທນຂັ້ນສູງແລະຂັ້ນຕ່າງໆນຳກັນ; ມີການແລກປ່ຽນຂໍ້ມູນຂ່າວສານ, ແລກປ່ຽນສານຊົມເຊີຍ ແລະ ສານອວຍພອນ ໃນໂອກາດວັນສຳຄັນຕ່າງໆຂອງ 2 ປະເທດ; ຮ່ວມມື, ສະໜັບສະໜູນ ແລະຊ່ວຍເຫຼືອເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນເວທີ AIPA, ASEP, IPU ແລະ ອົງການອື່ນໆ.

ສອງປະທານຍັງໄດ້ລົງນາມຮ່ວມກັນໃນບົດບັນທຶກວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດເບລາຣຸດຊີເຊິ່ງຈະເປັນນິຕິກຳທີ່ເປັນບ່ອນອີງໃຫ້ແກ່ສອງອົງການນິຕິບັນຍັດສືບຕໍ່ພົວພັນຮ່ວມມືນຳກັນ ທັງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ເປັນຕົ້ນ: ຈະສືບຕໍ່ແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ, ກຳມາທິການ, ຄະນະເລຂາທິການ ແລະ ຄະນະມິດຕະພາບລັດຖະສະພາຂອງສອງປະເທດ; ແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານ ໃນການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ; ຮ່ວມກັນຈັດກອງປະຊຸມສຳມະນາ, ທັດສະນະສຶກສາ ແລະ ຈັດກອງປະຊຸມແບບເຊິ່ງໜ້າ ແລະ ຜ່ານລະບົບເອເລັກໂຕຣນິກ; ຮ່ວມກັນຊຸກຍູ້ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ, ບັນດາໂຄງການຮ່ວມມືແລະໂຄງການລົງທຶນຕ່າງໆ ທີ່ສອງປະເທດໄດ້ລົງນາມຮ່ວມກັນໃຫ້ມີປະສິດທິພາບແລະປະສິດທິຜົນດີ; ສືບຕໍ່ແລກປ່ຽນຄຳເຫັນ, ຮ່ວມມື, ຊ່ວຍເຫຼືອ ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ກ່ອນໜ້ານີ້, ທ່ານ ອີກໍ ເຊີເກເຢນໂກ ພ້ອມດ້ວຍຄະນະຍັງໄດ້ວາງກະຕ່າດອກ ໄມ້ຢູ່ອະນຸສາວະລີຫໍພິພິທະພັນປະທານໄກສອນພົມວິຫານ, ພົບປະກັບທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີແລະທ່ານປອ. ເພັດ ພົມພິພັກ ລັດຖະມົນຕີກະຊວງແຜນການແລະການລົງທຶນອີກດ້ວຍ.

**(ນາງ ອາລິນ ສຸພົມມະປະດິດ)**

# ປະທານກຳມາທິການການຕ່າງປະເທດ ພົບປະສະມາຊິກລັດຖະສະພາເຢຍລະມັນ



(ສພຊ) - ຕອນແລງວັນອາທິດທີ 20 ຕຸລານີ້ ທີ່ຫໍປະຊຸມແຫ່ງຊາດ, ທ່ານ ສົມຍາ ປະເສີດ ປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະ ໄດ້ພົບປະທ່ານ ນາງ ກາບຣີເອເລ ຄາດຊ໌ມາເຣັກ (Gabriele Katzmarek) ສະມາຊິກລັດຖະສະພາ ແຫ່ງ ສາທາລະນະລັດສະຫະພັນ ເຢຍລະມັນ ໃນໂອກາດທີ່ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ ຄັ້ງທີ 45 ທີ່ ສປປລາວ ເປັນເຈົ້າພາບ.

ໃນການພົບປະ, ສອງຝ່າຍໄດ້ພ້ອມກັນຕີລາຄາຄືນຕໍ່ການພົວພັນຮ່ວມມືນຳກັນຢ່າງປົກກະຕິລະຫວ່າງສະພາແຫ່ງຊາດລາວ ກັບ ລັດຖະສະພາເຢຍລະມັນເຊິ່ງສະແດງອອກໃນການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນນຳກັນເປັນປົກກະຕິ; ແລກປ່ຽນຂໍ້ມູນຂ່າວສານ, ສານຊົມເຊີຍ ແລະ ສານອວຍພອນໃນໂອກາດວັນສຳຄັນຕ່າງໆ ພ້ອມທັງສະໜັບສະໜູນເຊິ່ງກັນແລະກັນໃນເວທີພາກພື້ນ ແລະ ສາກົນເປັນຕົ້ນແມ່ນກອງປະຊຸມຄູ່ຮ່ວມເຈລະຈາລັດຖະສະພາອາຊີ-ເອີຣົບ (ASEP), ສະຫະພັນລັດຖະສະພາສາກົນ (IPU) ແລະ ອື່ນໆ. ນອກຈາກນີ້, ສສ.ເຢຍລະມັນ ກໍຊ່ວຍ ເຫຼືອສະໜັບສະໜູນໃຫ້ແກ່ສະພາແຫ່ງຊາດລາວ ໂດຍຜ່ານໂຄງການເຊກາ, ໂລຊາລຸກຊໍາບວກ ແລະ ອົງການສາກົນຕ່າງໆເພື່ອເສີມສ້າງຄວາມເຂັ້ມແຂງໃນດ້ານຕ່າງໆເປັນຕົ້ນທາງດ້ານເຕັກນິກ-ວິຊາການ, ການສ້າງ ແລະ ປັບປຸງກົດໝາຍ, ທັດສະນະສຶກສາ, ກອງປະຊຸມສຳມະນາແລະອື່ນໆເຊິ່ງເປັນປະໂຫຍດຢ່າງຍິ່ງໃຫ້ແກ່ສະພາແຫ່ງຊາດລາວ ໂດຍສະເພາະໄລຍະການກະກຽມກ່ອນກອງປະຊຸມໄອປາ-45 ແມ່ນໄດ້ໃຫ້ການສະໜັບສະໜູນໃນການຈັດສຳມະນາຕ່າງໆໃຫ້ແກ່ພະນັກງານການນຳ ແລະ ພະນັກງານຮັບໃຊ້ກອງປະຊຸມຂອງສະພາແຫ່ງຊາດ.

ສອງຝ່າຍຍັງໄດ້ສະເໜີທິດທາງແຜນການພົວພັນຮ່ວມມືກັນໃນຕໍ່ໜ້າ ໂດຍສືບຕໍ່ແລກປ່ຽນຄະນະຜູ້ແທນນຳກັນ ໃນລະດັບຕ່າງໆຢ່າງປົກກະຕິ ແລະ ຕໍ່ເນື່ອງ; ຮ່ວມມືທາງວິຊາການດ້ວຍຮູບການຈັດສຳມະນາ, ຝຶກອົບຮົມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນນຳກັນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຍົກສູງຂີດຄວາມສາມາດແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຂອງ ສປປລາວ; ຊຸກຍູ້ ແລະ ສົ່ງເສີມໃຫ້ລັດຖະບານຂອງສອງປະເທດ ຈັດຕັ້ງປະຕິບັດສົນທິສັນຍາ, ສັນຍາ ແລະ ຂໍ້ຕົກລົງທີ່ສອງລັດຖະບານໄດ້ຮ່ວມກັນລົງນາມ ໃຫ້ມີປະສິດທິຜົນ; ຮ່ວມມື, ຊ່ວຍເຫຼືອ ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ກຸກກິກ ບຸດດາໄຊ)**




## ກອງປະຊຸມ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນບ່າຍວັນທີ 21 ຕຸລາຜ່ານມາ ທີ່ຫໍປະຊຸມແຫ່ງຊາດ, ໄດ້ມີກອງປະຊຸມຄົບຄະນະວາລະທີ 2 ຂອງກອງປະຊຸມໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ45 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດແຫ່ງ ສປປລາວ ທັງເປັນປະທານ AIPA-45; ເຂົ້າຮ່ວມມີບັນດາທ່ານປະທານລັດຖະສະພາ, ຫົວໜ້າຄະນະຜູ້ແທນລັດຖະສະພາສະມາຊິກໄອປາ ແລະ ບັນດາທ່ານຫົວໜ້າຄະນະຜູ້ແທນລັດຖະສະພາສັງເກດການຂອງໄອປາ, ບັນດາທ່ານສະມາຊິກລັດຖະສະພາ, ທ່ານເລຂາທິການໃຫຍ່ໄອປາ, ທ່ານເລຂາທິການໃຫຍ່ອາຊຽນ ແລະບັນດາແຂກຖືກເຊີນ.

ໃນກອງປະຊຸມ ໄດ້ມີການປຶກສາຫາລື ແລະ ຮັບຮອງເອົາບັນດາບົດລາຍງານຂອງກຳມາທິການການເມືອງ, ກຳມາທິການເສດຖະກິດ, ກຳມາທິການສັງຄົມ, ກອງປະຊຸມວຽກງານສະມາຊິກລັດຖະສະພາເພດຍິງໄອປາ (WAIPA), ກອງປະຊຸມວຽກງານສະມາຊິກລັດຖະສະພາໄວໜຸ່ມໄອປາ (YPA), ກຳມາທິການວຽກງານຈັດຕັ້ງພາຍໃນໄອປາ, ກອງປະຊຸມພົບປະລັດຖະສະພາ ແລະ ປະເທດສັງເກດການໄອປາ, ກອງປະຊຸມຮັບຟັງລະຫວ່າງກອງເລຂາໄອປາແລະອາຊຽນ ຄັ້ງທີ 3; ຈາກນັ້ນ, ຫົວໜ້າຄະນະຜູ້ແທນລັດຖະສະພາສະມາຊິກອາຊຽນ ໄດ້ຖະແຫຼງການ ແລະ ລົງນາມໃນບົດຖະແຫຼງຮ່ວມກັນ.

**(ນາງ ອາລິນ ສຸພົມມະປະກິດ)**



## ຄູ່ຮ່ວມຍຸດທະສາດ...

(ຕໍ່ຈາກໜ້າ 1)

ປູເຈຍ ໃນໂອກາດທີ່ນຳພາຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດກຳປູເຈຍ ມາເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ45 ທີ່ ສປປລາວເປັນເຈົ້າພາບ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຕີລາຄາສູງຕໍ່ການເຂົ້າຮ່ວມກອງປະຊຸມໄອປາຄັ້ງນີ້ ເປັນການປະກອບສ່ວນສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ມີມູນເຊື້ອ, ການພົວພັນແບບຄູ່ຮ່ວມຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງສອງປະເທດລາວ-ກຳປູເຈຍ ທັງເປັນການໃຫ້ກຳລັງໃຈ ແລະສະໜັບສະໜູນສະພາແຫ່ງຊາດລາວປະຕິບັດພັນທະສາກົນໃຫ້ສຳເລັດຢ່າງຈົບງາມ; ພ້ອມທັງຝາກຄວາມຢື້ຢາມຖາມຂ່າວ ແລະ ຄຳເຊື້ອເຊີນ ຜ່ານສົມເດັດປະທານສະພາແຫ່ງຊາດ ໄປຍັງສົມເດັດຮຸນເຊນປະທານສະພາສູງກຳປູເຈຍ ມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ໃນວັນເວລາທີ່ເໝາະສົມ.

ໃນການພົບປະ, ສອງຝ່າຍໄດ້ແຈ້ງສະພາບການທີ່ພົ້ນເດັ່ນຂອງປະເທດ ແລະ ຂອງສະພາແຫ່ງຊາດ ໃຫ້ກັນ ແລະກັນຊາບໂດຍຫຍໍ້ ພ້ອມທັງຕີລາຄາສູງຕໍ່ການພົວພັນແລະການຮ່ວມມືລະຫວ່າງສອງປະເທດທີ່ໄດ້ຮັດແໜ້ນ ແລະ ເສີມຂະຫຍາຍຢ່າງຕໍ່ເນື່ອງ ສະແດງອອກໃນການແລກປ່ຽນຄະນະຜູ້ແທນຂັ້ນສູງສຸດ ແລະ ຂັ້ນຕ່າງໆ ນັບແຕ່ສູນກາງຮອດທ້ອງຖິ່ນຢ່າງປົກກະຕິ; ນອກນີ້, ບັນດາຂະແໜງການຂອງສອງປະເທດ ກໍມີການພົວພັນຮ່ວມມື ແລະ ຊ່ວຍເຫຼືອເຊິ່ງກັນແລະກັນເຊິ່ງໄດ້ມີສົນທິສັນຍາ, ສັນຍາ, ບົດບັນທຶກ ແລະ ນິຕິກຳອື່ນໆນຳກັນ ທີ່ພົວພັນເຖິງການຮ່ວມມືດ້ານການເມືອງ-ການຕ່າງປະເທດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເສດຖະກິດ, ການຄ້າ, ການລົງທຶນດ້ານພະລັງງານ, ການຄົມມະນາຄົມ-ຂົນສົ່ງ, ການສຶກສາ-ກິລາ, ການທ່ອງທ່ຽວແລະອື່ນໆ. ທ່ານປະທານສະພາແຫ່ງຊາດລາວ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງໃນຫຼາຍດ້ານທີ່ປະຊາຊົນກຳປູເຈຍຍາດມາໄດ້, ເປັນການປະກອບສ່ວນເຮັດໃຫ້ລາຊະອານາຈັກກຳປູເຈຍ ມີສະຖຽນລະພາບດ້ານການເມືອງ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນເປັນກ້າວໆ ແລະ ບົດບາດອິດທິພົນຊື່ສຽງຂອງກຳປູເຈຍ ນັບມື້ນັບໄດ້ຮັບການຍົກສູງຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ທ່ານ ປອ. ໄຊສົມພອນ ພົມວິຫານ ຍັງໄດ້ແຈ້ງໃຫ້ຊາບຕື່ມອີກວ່າ: ປັດຈຸບັນ ສປປລາວ ສຸມໃສ່ກະກຽມ ປັບປຸງລັດຖະທຳມະນູນ ແລະກົດໝາຍທີ່ກ່ຽວຂ້ອງຕ່າງໆ ຕາມແນວທາງປ່ຽນແປງໃໝ່ຢ່າງຮອບດ້ານທີ່ມີຫຼັກການຂອງພັກ ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ມີຄວາມເຂັ້ມງວດ ແລະ ສັກ ສິດເປັນກ້າວໆ, ສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນແລະກົດໝາຍໃນທົ່ວສັງຄົມ ໄດ້ຮັບການຍົກສູງຂຶ້ນ ໄດ້ສ້າງເງື່ອນໄຂພື້ນຖານໃຫ້ແກ່ການສ້າງລັດ ສປປ ລາວໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍເທື່ອລະກ້າວແລະການກະກຽມກອງປະຊຸມໃຫຍ່ 3 ຂັ້ນ ກ້າວເຂົ້າສູ່ກອງປະຊຸມໃຫຍ່ຄັ້ງທີXII ຂອງພັກໃນຕົ້ນປີ2026 ແລະ ສະພາແຫ່ງຊາດ ກໍຫ້າງຫາກະກຽມໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ8 ຂອງສະພາແຫ່ງຊາດຊຸດທີIX ໃນເດືອນພະຈິກນີ້.

ສອງປະທານສະພາແຫ່ງຊາດ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງທີ່ເຫັນວ່າສະພາແຫ່ງຊາດລາວ ແລະ ກຳປູເຈຍ ໄດ້ມີມູນເຊື້ອແຫ່ງການພົວພັນຮ່ວມມືທີ່ດີງາມ ສະໜິດສະໜົມແຕ່ດົນນານເປັນການສະແດງອອກໃນການຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ເປັນຕົ້ນແມ່ນການແລກປ່ຽນຢ້ຽມຢາມທຸກໆຂັ້ນທີ່ຕິດພັນກັບການແລກປ່ຽນບົດຮຽນປະສົບການໃນການປະຕິບັດພາລະບົດບາດດ້ານນິຕິບັນຍັດ. ອັນພົ້ນເດັ່ນໃນເດືອນທັນວາ2023, ສົມເດັດປະທານສະພາແຫ່ງຊາດກຳປູເຈຍ ໄດ້ຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ແລະ ເຂົ້າຮ່ວມກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1; ໃນວັນທີ 09 ຕຸລາຜ່ານມານີ້, ທ່ານ ປອ. ໄຊສົມພອນ ພົມວິຫານ ກໍໄດ້ຕ້ອນຮັບທ່ານ ຈຽມ ຢຽບ (Cheam Yeab) ຮອງປະທານສະພາແຫ່ງຊາດກຳປູເຈຍ ຜູ້ທີໜຶ່ງ ໃນໂອກາດເຂົ້າຮ່ວມກອງປະຊຸມພົບປະລະຫວ່າງ ຜູ້ນຳອາຊຽນ ແລະ ໄອປາ ຄັ້ງທີ 13 ເຊິ່ງສະແດງໃຫ້ເຫັນວ່າສອງສະພາແຫ່ງຊາດ ຍາມໃດກໍມີການຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ສຳລັບທິດທາງການຮ່ວມມືລະຫວ່າງສອງສະພາແຫ່ງຊາດໃນຕໍ່ໜ້າ, ສອງຝ່າຍຈະສືບຕໍ່ຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືທີ່ສອງສະພາແຫ່ງຊາດໄດ້ລົງນາມຮ່ວມກັນໃນໄລຍະຜ່ານມາ ໃຫ້ເປັນຮູບປະທຳກວ່າເກົ່າ ໂດຍສືບຕໍ່ແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆ ນັບແຕ່ສູນກາງຮອດທ້ອງຖິ່ນຢ່າງປົກກະຕິ ໂດຍສະເພາະການແລກປ່ຽນຢ້ຽມຢາມລະຫວ່າງສະພາປະຊາຊົນຂັ້ນແຂວງທີ່ມີຊາຍແດນຕິດຈອດກັນເພື່ອແລກປ່ຽນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດນຳກັນ; ຊຸກຍູ້ ແລະ ສົ່ງເສີມໃຫ້ຂະແໜງການຂອງສອງລັດຖະບານ ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາສົນທິສັນຍາ, ສັນຍາ ແລະ ນິຕິກຳອື່ນໆທີ່ສອງຝ່າຍໄດ້ລົງນາມຮ່ວມກັນ ໃຫ້ມີປະສິດທິຜົນສູງກວ່າເກົ່າ ແລະ ນຳເອົາປະໂຫຍດອັນແທ້ຈິງມາສູ່ປະຊາຊົນສອງຊາດ; ຮັດແໜ້ນ ແລະ ເສີມຂະຫຍາຍການພົວພັນຮ່ວມມືທີ່ເປັນມູນເຊື້ອທີ່ດີງາມມາແຕ່ດົນນານຂອງສອງອົງການນິຕິບັນຍັດ ໃນການສະໜັບສະໜູນ ແລະ ຮ່ວມມືກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

## ການພົວພັນ...

(ຕໍ່ຈາກໜ້າ 1)

ຊົນ ອານເຊຣີ; ໃນໂອກາດນີ້, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການເດີນທາງມາເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ຂອງທ່ານ ມອນເດີ ບູເດນ ພ້ອມດ້ວຍຄະນະ ເຊິ່ງເປັນການໃຫ້ກຳລັງໃຈ ແລະ ສະໜັບສະໜູນການປະຕິບັດພັນທະສາກົນຂອງສະພາແຫ່ງຊາດລາວໃນນາມປະທານໄອປາ ກໍຄືເປັນເຈົ້າພາບກອງປະຊຸມ AIPA ຄັ້ງທີ 45 ໄດ້ຮັບຜົນສຳເລັດຢ່າງຈົບງາມ, ທັງເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີລະຫວ່າງສອງປະເທດ ໃຫ້ນັບມື້ນັບຂະຫຍາຍຕົວ ແລະ ເປັນຮູບປະທຳຍິ່ງໆຂຶ້ນ.

ທ່ານ ມອນເດີ ບູເດນ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບແລະການຮ່ວມມືອັນດີລະຫວ່າງ 2 ປະເທດ ກໍຄືລະຫວ່າງສອງອົງການນິຕິບັນຍັດຂອງອານເຊຣີ-ລາວ ພ້ອມທັງແຈ້ງສະພາບການທີ່ພົ້ນເດັ່ນຂອງປະເທດ, ສະພາຜູ້ແທນປະຊາຊົນແຫ່ງຊາດ, ຜົນຂອງການພົບປະສອງຝ່າຍກັບທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ແລະ ບັນຫາອື່ນໆ ໃຫ້ໄດ້ຮັບຊາບໂດຍຫຍໍ້.

ການພົວພັນຮ່ວມມືລະຫວ່າງສອງປະເທດໃນຕະຫຼອດໄລຍະຜ່ານມາ ໄດ້ມີການຂະຫຍາຍຕົວກ້າວຂຶ້ນຢ່າງເປັນລຳດັບ, ສປປລາວ ແລະ ສປປອານເຊຣີໄດ້ສ້າງຕັ້ງສາຍພົວພັນການທູດນຳກັນໃນວັນທີ 15 ພຶດສະພາ 1973 ໂດຍມີສະຖານທູດອານເຊຣີປະຈຳນະຄອນຫຼວງຮ່າໂນ້ຍ, ສສ.ຫວຽດນາມ ຮັບຜິດຊອບ ສປປລາວ, ສ່ວນ ສປປ ລາວ ມີສະຖານເອກອັກຄະລັດຖະທູດທີ່ຝຣັ່ງ ຮັບຜິດຊອບອານເຊຣີ; ການພົວພັນລະຫວ່າງສອງປະເທດໃນດ້ານການເມືອງແລະການຮ່ວມມືໃນເວທີສາກົນແມ່ນຢູ່ໃນລະດັບປົກກະຕິ, ຜູ້ນຳຂອງສອງປະເທດມີການແລກປ່ຽນການພົບປະກັນໃນໂອກາດເຂົ້າຮ່ວມກອງປະຊຸມສາກົນ. ສປປ ລາວ ໄດ້ສະໜັບສະໜູນອານເຊຣີ ໃນການສະໝັກເຂົ້າເປັນສະມາຊິກສະພາຄວາມໝັ້ນຄົງສິດທິມະນຸດຂອງອົງການສະຫະປະຊາຊາດ (ສປຊ) ໄລຍະປີ2023-2025 ໃນຂົງເຂດອາຟຣິກາແລະສະໜັບສະໜູນອານເຊຣີໃນການລົງສະໝັກເຂົ້າເປັນສະມາຊິກຂອງຄະນະກຳມະການຕ່າງໆໃນຂອບວຽກງານຂອງ ສປຊ ຄື: ຄະນະກຳມະການກົດໝາຍສາກົນ (International Law Commission) ສົກປີ 2023-2027, ສະມາຊິກຂອງຄະນະກຳມະການຊີດໍ (CEDAW) ສົກປີ 2023-2026, ສະມາຊິກສະພາສິດທິມະນຸດ (Human Rights Council) ສົກປີ2023-2025 ແລະ ສະມາຊິກບໍ່ຖາວອນຂອງສະພາຄວາມໝັ້ນຄົງ ສປຊ (UNSC) ສົກປີ 2024-2025.

ເພື່ອສືບຕໍ່ການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ, ສອງຝ່າຍມີຄວາມເຊື່ອໝັ້ນວ່າໃນຕໍ່ໜ້ານີ້ ຈະມີການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ, ກຳມາທິການ, ຄະນະເລຂາທິການ ແລະ ຄະນະມິດຕະພາບລັດຖະສະພາຂອງສອງປະເທດ ຫຼື ອາດຈະພົບປະກັນຜ່ານລະບົບເອເລັກໂຕຣນິກ; ສືບຕໍ່ແລກປ່ຽນຄຳເຫັນ, ຮ່ວມມື, ຊ່ວຍເຫຼືອ ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນແລະສາກົນ.

ຫຼັງຈາກພົບປະ, ຄະນະຜູ້ແທນອານເຊຣີ ຍັງໄດ້ຢ້ຽມຊົມຫ້ອງປະຊຸມໃຫຍ່ ແລະ ຫ້ອງມູນເຊື້ອຂອງສະພາແຫ່ງຊາດລາວອີກດ້ວຍ.

**(ສອນສັກ ວັນວິໄຊ)**




# ຮູ້ຄົນອື່ນ ແຕ່ບໍ່ຮູ້ຈັກໂຕເອງ...?

# ດົ້ນກົບເມກ

ຄຳວ່າຮູ້ເຂົາຮູ້ເຮົາຍ່ອມໄດ້ໄຊຊະນະ ເຊິ່ງຄວນຄິດຕີຄວາມໝາຍໃຫ້ແຈ້ງເລິກເຊິ່ງ ເຖິງຖອງວ່າ ຄຳເວົ້າທີ່ພາໃຫ້ຄິດນັ້ນມັນໃຫ້ຄະຕິບົດຮຽນຊີວິດຈິງ ຫຼື ຈະຖືເປັນພຽງເວົ້າມ່ວນເວົ້າໄດ້ອວດກັນວ່າຈື່ຈຳໄດ້ດີ ເລື່ອງຂອງຄວາມຮູ້ມີຫຼາຍລະດັບ ຝ່າຍການສຶກສາຈຶ່ງຈັດລະດັບຊັ້ນຮຽນແຍກໄວ້ໃຫ້ຮູ້ຊັດເຈນຕ່ຳ-ສູງ ເຊິ່ງປະເດັນສຳຄັນຢູ່ທີ່ຄຸນນະພາບຄວາມຮູ້ຈິງວ່ານັກຮຽນ-ນັກສຶກສາທີ່ຈົບຢູ່ໃນແຕ່ລະຊັ້ນນັ້ນໄດ້ຄວາມຮູ້ສົມກັບຊັ້ນຮຽນ ຫຼື ພຽງແຕ່ຮຽນຜ່ານ ເອົາໃບປະກາດແລ້ວອວດໃສ່ຄົນອື່ນ. ຮູ້ເຂົາ-ຮູ້ເຮົາ ຈະຮູ້ເລິກພຽງໃດນັ້ນໜ້າຄິດ ເພາະຄົນລາວເຮົາມີສັບເວົ້າວ່າ: ຮູ້ພໍກະຈາ ບໍ່ຮູ້ເລິກເຊິ່ງຊັດເຈນ, ຮູ້ພໍແຕ່ຄຳທາງໄປໄດ້ ແຕ່ບໍ່ຮູ້ເຖິງປາຍທາງ ຫຼື ບໍ່ສາມາດຮູ້ລະອຽດວ່າຜົນຮັບຂ້າງໜ້າມັນຈະເກີດຫຍັງຂຶ້ນ, ບາງຄົນຫຼົງເຂົ້າໃຈຜິດວ່າການສຶກສາພຽງແຕ່ສອນໃຫ້ເບິ່ງໄປຂ້າງໜ້າ ເຊິ່ງບໍ່ເຄີຍຮຽນຮູ້ອະດີດຄວາມເປັນມາຂອງຕົນທີ່ສົ່ງຜົນໃຫ້ເຫັນແລ້ວວ່າປັດຈຸບັນມັນເກີດຈາກອະດີດທີ່ກຳນົດທິດທາງກ້າວຜ່ານມາ, ສັງຄົມວັດທະນະທຳ-ຮີດຄອງປະເພນີ, ສິລະປະວັນນະຄະດີ ຂອງຊາດທີ່ເປັນດັ່ງຈິດວິນຍານຂອງຊາດເຮົາຈະໃຫ້ຄວາມສຳຄັນໜ້ອຍຫຼາຍພຽງໃດ? ດັ່ງນັ້ນການຮຽນຮູ້ໂລກ-ຮູ້ຈາກມະຫາວິທະຍາໄລ ຍັງບໍ່ພຽງພໍ ແຕ່ການຮູ້ຈັກຕົນເອງຢ່າງເລິກເຊິ່ງນັ້ນສຳຄັນຄືກັນກັບການຮູ້ຈັກຄົນອື່ນຮູ້ໂຕເອງ ຄືຮູ້ຈຸດແຂງ-ຈຸດອ່ອນ ທີ່ມາຢ່າງລະອຽດ, ຮູ້ຄົນອື່ນ ຮູ້ຂໍ້ດີ-ຂໍ້ເສຍຂອງເຂົາ; ຮູ້ທັນເຂົາ ອັນໃດມີປະໂຫຍດ ອັນໃດມີຜົນດີ ອັນໃດເປັນຂອງລວງຕາ ເຊິ່ງມັນຈະກ້ຽວໄປຫາຄຳຖາມຄືນວ່າ: ແຕ່ລະຊັ້ນຂອງການສຶກສາ ໄດ້ຮັບຜົນຜະລິດຢ່າງມີຄຸນນະພາບພຽງໃດ ຫຼື ຈະເອົາພຽງແຕ່ຊັ້ນສູງໆເປັນຄ່ານິຍົມອວດກັນເພາະບາງເທື່ອພວກລູກຜິດຖຽງກັນ ຖ້າພໍ່ແມ່ບໍ່ຮູ້ໄຈ້ແຍກ ບໍ່ຮູ້ຕັດສິນ ກໍຈະເຮັດໃຫ້ບັນຫາສັບສົນຕື່ມ ຫຼື ຖ້າພໍ່ແມ່ບໍ່ຟັງເຫດຜົນລູກຫຼານຢ່າງພຽງພໍ ບາງທີກໍເຮັດໃຫ້ສູນເສຍລູກທີ່ດີໄດ້ຄືກັນ ຢ່າລືມວ່າການສ້າງຄອບຄົວ ໃຫ້ຈະເລີນກ້າວໜ້າໝັ້ນຄົງ ຍ່ອມອາໄສລູກດີ-ກະຕັນຍູ ດີກວ່າລູກເອົາໃຈພໍ່ແມ່. ການສຶກສາຊອດກະຈາຍ່ອມໄດ້ຜົນຜະລິດແບບຊອດກະຈາ ໝາຍຄວາມວ່າຮູ້ແຕ່ພຽງເປືອກເຂົ້າ ບໍ່ເຖິງແກ່ນ ຫຼື ຫຼົງຖືວ່າເປືອກເປັນແກ່ນພາໃຫ້ໄຂວ່ເຂວ!.






# ວິທີເຮັດວຽກ

**ພາກທີ 6**

**ວິທີນຳ**

ຈິງຢູ່, ບໍ່ແມ່ນປະຊາຊົນເວົ້າແນວໃດພວກເຮົາກໍຫຼັບຕາເຮັດນຳໝົດທຸກອັນ. ພະນັກງານກໍຕ້ອງໃຊ້ວິທີປຽບທຽບຂອງປະຊາຊົນມາຄິດປຽບທຽບເອົາເອງ, ໝາຍຄວາມວ່າເອົາຄຳເຫັນທີ່ຕ່າງກັນນັ້ນມາປຽບທຽບກັນຢ່າງລະອຽດຖີ່ຖ້ວນ, ຈຳແນກເບິ່ງເນື້ອໃນຂອງປະຊາຊົນຊົນຊັ້ນຕ່າງໆໃນສັງຄົມ ທີ່ມີຄຳເຫັນເຫຼົ່ານັ້ນໃຫ້ຄັກແນ່, ຊອກເບິ່ງບ່ອນຂັດແຍ່ງກັນລະຫວ່າງຄຳເຫັນເຫຼົ່ານັ້ນ, ກວດເບິ່ງໃຫ້ເຫັນຄັກວ່າອັນໃດຖືກອັນໃດຜິດ, ເລືອກເອົາຄຳເຫັນທີ່ຖືກນັ້ນອອກໄປໃຫ້ປະຊາຊົນປຶກສາຫາລື ແລະ ຄັດເລືອກເອົາ, ເພື່ອຄ່ອຍເຊີດຊູລະດັບຄວາມຕື່ນຕົວຂອງປະຊາຊົນໃຫ້ສູງກວ່າເກົ່າ. ແບບນັ້ນຮຽກວ່າ: "ລວບລວມຄຳເຫັນແລ້ວອອກແຮງປະຕິບັດ" ການປຽບໄປທຽບມາ ແລະ ຈຳແນກຄັກວ່ານັ້ນແມ່ນວິທີເຮັດວຽກທີ່ຖືກກັບຫຼັກວິທະຍາສາດ. ວຽກການທຸກອັນພວກເຮົາກໍຕ້ອງເຮັດຕາມແບບນັ້ນໝົດ. ເຮັດຕາມແບບນັ້ນ ຈຶ່ງຈະຫຼີກເວັ້ນການຜະເດັດການ ແລະ ຫຼີກເວັ້ນການຜິດພາດ.

ອ່ານຕໍ່ສະບັບໜ້າ...



# ກອງປະຊຸມ...

(ຕໍ່ຈາກໜ້າ 1)

ມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ໃຫ້ທົ່ວສັງຄົມໄດ້ຮັບຊາບວ່າ: ກອງປະຊຸມໄອປາ-45 ໄດ້ຈັດຂຶ້ນຢ່າງເປັນທາງການໃນລະຫວ່າງວັນທີ 17-23 ຕຸລາ 2024 ພາຍໃຕ້ຫົວຂໍ້ "ບົດບາດຂອງລັດຖະສະພາ ໃນການຊຸກຍູ້ການເຊື່ອມຈອດ ແລະ ການເຕີບໂຕແບບກວມລວມຂອງອາຊຽນ" ໂດຍການເປັນປະທານຂອງປະທານສະພາແຫ່ງຊາດແຫ່ງ ສປປລາວ, ກອງປະຊຸມໄດ້ຮັບກຽດຢ່າງສູງທີ່ທ່ານ ທອງລຸນ ສີສຸລິດ ປະທານປະເທດແຫ່ງ ສປປລາວ ເຂົ້າຮ່ວມ ແລະ ກ່າວສູນທອນພິດຕໍ່ພິທີເປີດ. ກອງປະຊຸມຄັ້ງນີ້ ມີຄະນະຜູ້ແທນນຳໂດຍບັນດາປະທານຈາກລັດຖະສະພາສະມາຊິກໄອປາ 8 ປະເທດ ອິນໂດເນເຊຍບໍ່ໄດ້ສົ່ງຄະນະຜູ້ແທນເຂົ້າ ເນື່ອງຈາກມີການກະກຽມເລືອກຕັ້ງພາຍໃນ, ສ່ວນປະເທດມຽນມາ ແມ່ນຍັງບໍ່ທັນມີສະພາແຫ່ງຊາດ ຈຶ່ງໄດ້ສົ່ງແຕ່ຜູ້ຕາງໜ້າເຂົ້າຮ່ວມ; ລັດຖະສະພາສັງເກດການ 15 ປະເທດ, ແຂກເຈົ້າພາບ 3 ປະເທດ, ຄູ່ຮ່ວມພັດທະນາໄອປາ 8 ພາກສ່ວນ, ເລຂາທິການໃຫຍ່ອາຊຽນ, ເລຂາທິການໃຫຍ່ໄອປາ, ທູຕານຸທູດ ປະຈຳ ສປປ ລາວ ແລະ ຄະນະຜູ້ແທນ ສປປລາວ ເຈົ້າພາບ ລວມປະມານ 600 ທ່ານເຂົ້າຮ່ວມ.

ໃນວາລະດຳເນີນກອງປະຊຸມສະມັດຊາໃຫຍ່ໄອປາ-45 ໃນຄັ້ງນີ້ ໄດ້ມີກອງປະຊຸມຕ່າງໆທັງໝົດ 11 ກອງປະ ຊຸມ ດັ່ງນີ້: 1. ກອງປະຊຸມຄະນະບໍລິຫານງານໄອປາ, 2. ກອງປະຊຸມກຳມາທິການການເມືອງ, 3. ກອງປະຊຸມກຳມາທິການເສດຖະກິດ, 4. ກອງປະຊຸມກຳມາທິການວຽກງານສັງຄົມ, 5. ກອງປະຊຸມກຳມາທິການວຽກງານຈັດຕັ້ງພາຍໃນ, 6. ກອງປະຊຸມກຳມາທິການສະມາຊິກສະພາເພດຍິງ, 7. ກອງປະຊຸມສະມາຊິກລັດຖະສະພາໜຸ່ມໄອປາ, 8. ກອງປະຊຸມກຳມາທິການຖະແຫຼງການຮ່ວມ, 9. ກອງປະຊຸມພົບປະລະຫວ່າງກອງເລຂາໄອປາ ແລະ ກອງເລຂາອາຊຽນ, 10. ກອງປະຊຸມພົບປະກັບລັດຖະສະພາສັງເກດການ, 11. ກອງປະຊຸມເວທີຜູ້ນຳການເມືອງເພດຍິງ. ໃນກອງປະຊຸມສະມັດຊາໃຫຍ່ໄອປາ-45, ບັນດາທ່ານປະທານລັດຖະສະພາ ແລະ ຫົວໜ້າຄະນະຜູ້ແທນແຕ່ລະປະເທດ ໄດ້ກ່າວປາໄສພາຍໃຕ້ຂອບຫົວຂໍ້ກອງປະຊຸມ ໂດຍຍົກໃຫ້ເຫັນສະພາບການຂອງໂລກ, ພາກພື້ນ ເຊິ່ງມີທັງກາລະໂອກາດແລະສິ່ງທ້າທາຍ, ພ້ອມກັນນີ້ ກໍໄດ້ຢ້ຳຄືນຄວາມໝາຍໝັ້ນຂອງຜູ້ນຳລັດຖະສະພາສະມາຊິກໄອປາທີ່ຈະຕ້ອງເພີ່ມທະວີບົດບາດລັດຖະສະພາ ໃນການຊຸກຍູ້ການເຊື່ອມຈອດແລະການເຕີບໂຕແບບກວມລວມຂອງອາຊຽນ; ນອກຈາກນີ້, ໃນກອງປະຊຸມກຳມາທິການປະຈຳຕ່າງໆຂອງໄອປາກໍໄດ້ລົງເລິກຄົ້ນຄວ້າປຶກສາຫາລື, ພິຈາລະນາ ແລະ ຮັບຮອງເອົາຮ່າງມະຕິທັງໝົດ 37 ສະບັບ ໃນນີ້ ຂົງເຂດວຽກງານການເມືອງ 4 ສະບັບ, ຂົງເຂດວຽກງານເສດຖະກິດ 8 ສະບັບ, ຂົງເຂດວຽກງານສັງຄົມ 5 ສະບັບ, ວຽກງານເພດຍິງ 2 ສະບັບ, ວຽກງານຊາວໜຸ່ມ 3 ສະບັບ ແລະ ວຽກງານຈັດຕັ້ງພາຍໃນໄອປາ 15 ສະບັບ ແລະໃນຕອນທ້າຍຂອງກອງປະຊຸມ, ບັນດາຫົວໜ້າຄະນະຜູ້ແທນສະມາຊິກລັດຖະສະພາໄອປາ ໄດ້ລົງນາມໃສ່ຖະແຫຼງການຮ່ວມກອງປະຊຸມສະມັດຊາໃຫຍ່ໄອປາ-45.

ກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງນີ້ ຍັງໄດ້ພິຈາລະນາຮັບຮອງເອົາປະເທດມາເລເຊຍເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງຕໍ່ໄປໃນປີ 2025.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຕາງໜ້າໃຫ້ສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ປະທານໄອປາຄັ້ງທີ 45 ສະແດງຄວາມຂອບໃຈທ່ານປະທານປະເທດແຫ່ງສປປລາວທີ່ໃຫ້ກຽດເຂົ້າຮ່ວມແລະກ່າວສູນທອນພິດຕໍ່ພິທີເປີດກອງປະຊຸມ; ສະແດງຄວາມຂອບໃຈບັນດາຄະນະຜູ້ແທນຈາກປະເທດສະມາຊິກອາຊຽນ, ບັນດາປະເທດສັງເກດການ, ແຂກປະເທດເຈົ້າພາບ, ຄູ່ຮ່ວມພັດທະນາຂອງໄອປາ, ເລຂາທິການໃຫຍ່ອາຊຽນ, ເລຂາທິການໃຫຍ່ໄອປາ, ທູຕານຸທູດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈຳ ສປປລາວ ແລະ ບັນດາຜູ້ແທນທັງໝົດ ທີ່ໄດ້ເຂົ້າຮ່ວມກອງປະຊຸມຢ່າງຕັ້ງໜ້າແລະປະກອບສ່ວນຢ່າງສຳຄັນ ເຮັດໃຫ້ກອງປະຊຸມຄັ້ງນີ້ມີຜົນສຳເລັດຢ່າງຈົບງາມ. ຂອບໃຈແລະຊົມເຊີຍຄະນະຮັບຜິດຊອບກະກຽມກອງປະຊຸມ ທີ່ໄດ້ເອົາໃຈໃສ່ປະກອບສ່ວນຢ່າງຫ້າວຫັນ, ມີຄວາມຮັບຜິດຊອບສູງໃນການກະກຽມ ແລະ ຕະຫຼອດໄລຍະການດຳເນີນກອງປະຊຸມຄັ້ງນີ້ ຈົນມີຜົນສຳເລັດຕາມຈຸດປະສົງແລະລະດັບຄາດໝາຍທີ່ວາງໄວ້; ສະແດງຄວາມຂອບໃຈແລະຊົມເຊີຍຢ່າງຈິງໃຈຕໍ່ສື່ມວນຊົນທຸກພາກສ່ວນທັງພາຍໃນແລະຕ່າງປະເທດ ທີ່ໄດ້ຕິດຕາມຢ່າງໃກ້ຊິດ ເພື່ອເກັບກຳຂ່າວ ແລະ ເຜີຍແຜ່ຢ່າງທັນການ ກ່ຽວກັບການດຳເນີນກອງປະຊຸມໃນຄັ້ງນີ້ ໃຫ້ແກ່ສັງຄົມໄດ້ຮັບຊາບຢ່າງທົ່ວເຖິງ. ພິເສດ, ໄດ້ສະແດງຄວາມຂອບ ໃຈປະຊາຊົນລາວບັນດາເຜົ່າເວົ້າລວມ, ໂດຍສະເພາະນະຄອນຫຼວງວຽງຈັນ ທີ່ໄດ້ຕ້ອນຮັບແຂກບ້ານເມືອງດ້ວຍບັນຍາກາດທີ່ອົບອຸ່ນ ແລະສຳຄັນແມ່ນການຮັກສາຄວາມປອດໄພ, ອຳນວຍຄວາມສະດວກຂອງເຈົ້າໜ້າທີ່ກອງກຳລັງຕ່າງໆ ທີ່ໄດ້ເປັນເຈົ້າການຮັກສາຄວາມເປັນລະບຽບຮຽບຮ້ອຍ ແລະ ເຮັດໃຫ້ກອງປະຊຸມໄດ້ຮັບຜົນສຳເລັດຢ່າງຈົບງາມ.

**(ນາງ ອາລິນ ສຸພົມມະປະດິດ)**



## ສອງອົງການ...

(ຕໍ່ຈາກໜ້າ 1)

ຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ທີ່ ສປປລາວ ເປັນເຈົ້າພາບ.

ໂອກາດນີ້, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຂອບໃຈທ່ານ ວັນ ມູຫະມັດນໍ ມະທາ ທີ່ໄດ້ນຳພາຄະນະຜູ້ແທນຂັ້ນສູງຂອງລັດຖະສະພາໄທ ເຂົ້າຮ່ວມກອງປະຊຸມໄອປາຄັ້ງທີ 45 ພ້ອມທັງຕີລາຄາສູງຕໍ່ການພົບປະສອງຝ່າຍຄັ້ງນີ້ ຖືເປັນການພົບປະກັນຄັ້ງທຳອິດ ພາຍຫຼັງທ່ານ ວັນ ມູຫະມັດນໍ ມະທາ ໄດ້ຮັບການເລືອກຕັ້ງເປັນປະທານລັດຖະສະພາ, ປະທານສະພາຜູ້ແທນລາດສະດອນໄທ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ກໍຄືການເປັນຄູ່ຮ່ວມຍຸດທະສາດເພື່ອການຈະເລີນເຕີບໂຕ ແລະ ການພັດທະນາແບບຍືນຍົງ ຂອງສອງປະເທດ ລາວ-ໄທ, ໄທ-ລາວ ໂດຍສະເພາະລະຫວ່າງສະພາແຫ່ງຊາດລາວ ກັບ ລັດຖະສະພາໄທ ໃຫ້ນັບມື້ຈະເລີນງອກງາມຍິ່ງໆຂຶ້ນ.

ສອງຝ່າຍໄດ້ແຈ້ງສະພາບການທີ່ພົ້ນເດັ່ນຂອງປະເທດ ແລະ ການຈັດຕັ້ງປະຕິບັດວຽກງານຂອງອົງການນິຕິບັນຍັດ ໃຫ້ກັນແລະກັນຊາບໂດຍຫຍໍ້ ແລະ ຮ່ວມກັນຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບ ສະພາຜູ້ແທນລາດສະດອນໄທ ໃນໄລຍະຜ່ານມາ ເຊິ່ງໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ ສະແດງອອກມີການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນລະດັບສູງ, ກຳມາທິການ, ຄະນະເລຂາທິການ ແລະ ຄະນະມິດຕະພາບລັດຖະສະພາ, ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດນິຕິບັນຍັດ, ຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືທີ່ໄດ້ລົງນາມຮ່ວມກັນໃນເດືອນທັນວາ 2022 ເຊິ່ງເປັນນິມິດໝາຍອັນສຳຄັນທາງປະຫວັດສາດແຫ່ງການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ທັງເປັນການປະກອບ ສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດແຜນປະຕິບັດງານການເປັນຄູ່ຮ່ວມຍຸດທະສາດເພື່ອການຈະເລີນເຕີບໂຕ ແລະການພັດທະນາແບບຍືນຍົງຂອງສອງປະເທດ ໃຫ້ມີປະສິດທິພາບສູງຂຶ້ນ; ພ້ອມນີ້, ສອງອົງການນິຕິບັນຍັດ ຍັງໄດ້ມີການພົວພັນຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນ AIPA, APPF, IPU, ASEP ແລະ ອື່ນໆ.

ສຳລັບທິດທາງການພົວພັນຮ່ວມມືໃນຕໍ່ໜ້າ, ສອງຝ່າຍຈະສືບຕໍ່ຈັດຕັ້ງປະຕິບັດເນື້ອໃນຈິດໃຈຂອງບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາໄທ ໃຫ້ເປັນຮູບປະທຳ ໂດຍສະເພາະສືບຕໍ່ແລກປ່ຽນຄະນະຜູ້ແທນຂັ້ນສູງ, ກຳມາທິການ, ຄະນະເລຂາທິການ ແລະ ຄະນະມິດຕະພາບ ລັດຖະສະພາ; ແລກປ່ຽນຂໍ້ມູນຂ່າວສານໃນການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ; ຕິດຕາມກວດກາການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງຕ່າງໆທີ່ສອງລັດຖະບານຂອງສອງປະເທດ ລົງນາມຮ່ວມກັນ ໃນດ້ານເສດຖະກິດ, ການຄ້າ-ການລົງທຶນ, ດ້ານພະລັງງານ, ການທ່ອງທ່ຽວ ແລະ ອື່ນໆ ກໍຄືການຈັດຕັ້ງປະຕິບັດແຜນປະຕິບັດງານວ່າດ້ວຍການເປັນຄູ່ຮ່ວມຍຸດທະສາດເພື່ອການຈະເລີນເຕີບໂຕ ແລະ ການພັດທະນາແບບຍືນຍົງ ໄລຍະ 5 ປີ (2022-2026); ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ແນໃສ່ປົກປັກຮັກສາສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ.

ຫຼັງຈາກການພົບປະສອງຝ່າຍ, ປະທານສະພາຜູ້ແທນລາດສະດອນໄທ ພ້ອມດ້ວຍຄະນະໄດ້ຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມສະພາແຫ່ງຊາດອີກດ້ວຍ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

## ສາຍພົວພັນ...

(ຕໍ່ຈາກໜ້າ 1)

ຕິມໍ ແລັດສະເຕ ໃນໂອກາດທີ່ນຳພາຄະນະຜູ້ແທນຂັ້ນສູງລັດຖະສະພາ ຕິມໍ ແລັດສະເຕ ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ໂດຍທ່ານປອ. ໄຊສົມພອນ ພົມວິຫານ ໄດ້ຕີລາຄາສູງຕໍ່ການພົບປະຄັ້ງທຳອິດ ເຊິ່ງເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີລະຫວ່າງ 2 ປະເທດ ແລະ ເປັນພື້ນຖານອັນສຳຄັນແກ່ການພົວພັນຮ່ວມມືລະຫວ່າງ 2 ອົງການນິຕິບັນຍັດ ລາວ-ຕິມໍ ແລັດສະເຕ ໃຫ້ໄດ້ຮັບການເສີມຂະຫຍາຍ ທັງເປັນການສະໜັບສະໜູນ ແລະ ໃຫ້ກຳລັງໃຈແກ່ສະພາແຫ່ງຊາດລາວເຮັດສຳເລັດພັນທະສາກົນໃນການເປັນປະທານໄອປາ ກໍຄືເປັນເຈົ້າພາບກອງປະຊຸມໃຫຍ່ໄອປາຄັ້ງທີ 45 ຢູ່ ສປປລາວ ໃນຄັ້ງນີ້ ໃຫ້ສຳເລັດຜົນຢ່າງຈົບງາມ.

ທ່ານ ນາງ ມາເຣຍ ເຟີນານດາ ເລ ໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີລະຫວ່າງສອງປະເທດ ແລະ ສອງອົງການນິຕິບັນຍັດ ຕິມໍ ແລັດສະເຕ-ລາວ ພ້ອມທັງແຈ້ງສະພາບການຕ່າງໆທີ່ພົ້ນເດັ່ນໃນການພັດທະນາປະເທດຊາດ ເຊິ່ງລວມຍອດຜະລິດຕະພັນພາຍໃນ (GDP) ໃນປີ 2024 ເພີ່ມຂຶ້ນເປັນ 1,453 ໂດລາສະຫະລັດຕໍ່ຄົນ, ປະເທດມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບປອດໄພ, ເສດຖະກິດມີການຂະຫຍາຍຕົວ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ.

ສປປລາວ ແລະ ສປ ຕິມໍ ແລັດສະເຕ ສ້າງຕັ້ງສາຍພົວພັນການທູດນຳກັນໃນວັນທີ 29 ກໍລະກົດ 2002 ນັບແຕ່ນັ້ນເປັນຕົ້ນມາ, ສາຍພົວພັນມິດຕະພາບ



ແລະ ການຮ່ວມມືອັນດີລະຫວ່າງສອງປະເທດ ສືບຕໍ່ໄດ້ຮັບການພັດທະນາ ແລະ ເຂົ້າສູ່ລວງເລິກເປັນກ້າວໆ ໂດຍສະເພາະການຮ່ວມມື ແລະ ຊ່ວຍເຫຼືອເຊິ່ງກັນແລະກັນໃນເວທີ ພາກພື້ນ ແລະ ສາກົນ, ສປປລາວ ຍາມໃດກໍໃຫ້ການສະໜັບສະໜູນຕິມໍ ແລັດສະເຕ ເຂົ້າເປັນສະມາຊິກອາຊຽນຕະຫຼອດມາ, ມີການແລກປ່ຽນການພົບປະຢ້ຽມຢາມຂອງຄະນະຜູ້ແທນຂັ້ນຕ່າງໆນຳກັນຢ່າງປົກກະຕິ; ພິເສດ ແມ່ນຜົນສຳເລັດຂອງການຢ້ຽມຢາມທາງລັດຖະກິດຢູ່ສປປລາວຂອງທ່ານ ໂຈເຊ ຣາໂມສ-ອໍຕາ (José Ramos-Horta) ປະທານາທິບໍດີ ແຫ່ງ ສປ ຕິມໍ ແລັດສະເຕ ໃນເດືອນກຸມພາ 2024 ແລະ ທ່ານ ເກ ຣາລາ ຊານານາກຸສ ເມົາ (Kay Rala Xanana Gusmão) ນາຍົກລັດຖະມົນຕີ ຕິມໍ ແລັດສະເຕ ກໍໄດ້ເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ແລະ ກອງປະຊຸມປິ່ນອ້ອມທີ່ ສປປລາວ ໃນເດືອນຕຸລານີ້. ສຳລັບການພົວພັນ ແລະ ຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບ ລັດຖະສະພາ ຕິມໍ ແລັດສະເຕ ເຖິງວ່າການແລກປ່ຽນຄະນະຜູ້ແທນສອງຝ່າຍຍັງໜ້ອຍ ແຕ່ກໍໄດ້ມີການແລກປ່ຽນສານອວຍພອນ ແລະ ສານຊົມເຊີຍໃນໂອກາດວັນສຳຄັນຕ່າງໆຂອງສອງປະເທດ, ພົບປະຮ່ວມມືໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ໃນນາມປະເທດສັງເກດການ, IPU ແລະ ອົງການອື່ນໆ.

ຕໍ່ການພົວພັນຮ່ວມມືຂອງສອງອົງການນິຕິບັນຍັດໃນຕໍ່ໜ້າ, ສອງຝ່າຍຈະແລກປ່ຽນຄະນະຜູ້ແທນນຳກັນ ຢ່າງປົກກະຕິ ເພື່ອການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານກ່ຽວກັບການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ ແລະ ໃນຫົວຂໍ້ອື່ນໆທີ່ສອງຝ່າຍມີຄວາມສົນໃຈ; ສືບຕໍ່ຊຸກຍູ້ ແລະ ສົ່ງເສີມໃຫ້ລັດຖະບານຂອງສອງປະເທດຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງຕ່າງໆທີ່ໄດ້ລົງນາມຮ່ວມກັນໃຫ້ປາກົດຜົນເປັນຈິງ ເປັນຕົ້ນແມ່ນການຮ່ວມມືໃນວຽກງານການຕ່າງປະເທດ, ດ້ານການຄ້າ-ການລົງທຶນ, ການທ່ອງທ່ຽວ ແລະ ອື່ນໆ ໃຫ້ຫຼາຍຂຶ້ນ; ສອງລັດຖະບານສອງປະເທດ ໄດ້ແລກປ່ຽນດິນປຸກສ້າງສຳນັກງານການທູດລະຫວ່າງສອງປະເທດທີ່ໄດ້ລົງນາມໃນເດືອນກຸມພາ 2024 ຫວັງວ່າຈະໄດ້ຮັບການຈັດຕັ້ງປະຕິບັດໂດຍໄວ; ສືບຕໍ່ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນໃນການເຄື່ອນໄຫວຢູ່ເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 4)

ຊຽນ ຄັ້ງທີ 45 ຜ່ານມາ; 2) ຮ່າງມະຕິວ່າດ້ວຍການນຳໃຊ້ດິຈິຕອນແບບກວມລວມ ເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊາດໃນພາກພື້ນ; 3) ຮ່າງມະຕິວ່າດ້ວຍການສົ່ງເສີມການຮ່ວມມືລະຫວ່າງປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນຜ່ານການເຊື່ອມໂຍງເຊື່ອມຈອດ ແລະ ການເຕີບໂຕແບບກວມລວມ; 4) ຮ່າງມະຕິວ່າດ້ວຍການສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນໃນການຮັກສາສັນຕິພາບ, ສະຖຽນລະພາບແລະການພັດທະນາໃນພາກພື້ນ.

ຜົນຂອງກອງປະຊຸມດັ່ງກ່າວ, ຈະຖືກນຳໄປລາຍງານຕໍ່ກອງປະຊຸມຄົບຄະນະວາລະທີ 2 ເພື່ອພິຈາລະນາຮັບຮອງກ່ອນພິທີປິດກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45.

**(ກົງທະນູຄຳ ພິພັດເສລີ)**

## ສຳມະນາ...

(ຕໍ່ຈາກໜ້າ 6)

ງານດັ່ງກ່າວ.

ກອງປະຊຸມຄັ້ງນີ້ ມີຈຸດປະສົງເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ແນໃສ່ຍົກສູງບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງເພື່ອຮັບປະກັນໃນການພິຈາລະນາອະນຸມັດໂຄງການລົງທຶນທີ່ກ່ຽວພັນກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ ໄດ້ຮັບການພິຈາລະນາຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ຮັບປະກັນ ພື້ນທີ່ທີ່ມີຄວາມອຸດົມສົມບູນທາງດ້ານຊີວະນາໆພັນ ເຊັ່ນ: ເຂດປ່າສະຫງວນ, ເຂດຊີວະນາໆພັນທີ່ສຳຄັນ, ເຂດທີ່ດິນບໍລິເວນນ້ຳ ລວມທັງຊະນິດພັນພືດ ແລະ ສັດທີ່ໄດ້ຮັບການຄຸ້ມຄອງພາຍໃຕ້ກົດໝາຍ ສປປລາວ, ສົນທິສັນຍາ ແລະ ສັນຍາສາກົນ ຖືກນຳມາພິຈາລະນາໃນຂະບວນການວາງແຜນ ແລະ ຕັດສິນໃຈລົງທຶນ ເພື່ອສາມາດບັນລຸເປົ້າໝາຍການພັດທະນາແບບຍືນຍົງ, ການພັດທະນາເສດຖະກິດທີ່ສອດຄ່ອງກັບການອະນຸລັກຊີວະນາໆພັນ ແລະ ການບໍລິການລະບົບນິເວດຂອງ ສປປລາວ.

ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ກ່າວວ່າ: ໃນໄລຍະຜ່ານມາ ສປປລາວ ໄດ້ມີການຂະຫຍາຍຕົວທາງດ້ານເສດຖະກິດຢ່າງໄວວາ ປະກອບກັບການລົງທຶນທີ່ເພີ່ມຂຶ້ນໃນດ້ານການພັດທະນາພື້ນຖານໂຄງລ່າງຂະໜາດໃຫຍ່ ເຊັ່ນ: ທາງລົດໄຟ, ຖະໜົນຫົນທາງ ແລະ ບັນດາອຸດສາຫະກຳການຂຸດຄົ້ນ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ເຊັ່ນ: ພະລັງງານໄຟຟ້ານ້ຳຕົກ, ບໍ່ແຮ່, ກະສິກຳ ແລະ ປ່າໄມ້ ເຊິ່ງໄດ້ມີການນຳເນື້ອທີ່ດິນ ແລະ ບຸກລຸກເນື້ອທີ່ປ່າໄມ້ ແລະ ຫັນປ່ຽນທີ່ດິນປ່າໄມ້ຫຼາຍພໍສົມຄວນ; ໃນຂະນະດຽວກັນ, ສປປລາວ ກໍໄດ້ຍຶດໝັ້ນການຈັດຕັ້ງປະຕິບັດວາລະການເຕີບໂຕສີຂຽວ ແລະ ໄດ້ມີການສ້າງແຜນຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດປ່າ, ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ, ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ຄູ່ມືແນະນຳວ່າດ້ວຍການປະເມີນສິ່ງແວດລ້ອມຍຸດທະສາດ ແລະ ອື່ນໆ ເພື່ອເປັນເຄື່ອງມືໃນການຊ່ວຍຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເອື້ອອຳນວຍກັບການອະນຸລັກຊີວະນາໆພັນ ແລະ ການບໍລິການຂອງລະບົບນິເວດ.

ທີ່ປະຊຸມໄດ້ຮັບຟັງການນຳສະເໜີກ່ຽວກັບລະບົບປ່າໄມ້ ແລະ ປ່າສະຫງວນແຫ່ງຊາດ ຢູ່ ສປປລາວ ແລະ ບັນຊີສັດປ່າຢູ່ ສປປລາວ; ເຜີຍແຜ່ສົນທິສັນຍາສາກົນກ່ຽວກັບສິ່ງແວດລ້ອມ ເຊັ່ນ: CITES, CBD, Ramsar; ການຄຸ້ມຄອງປ່າໄມ້ ແລະ ມາດຕະການຫຼຸດຜ່ອນຜົນກະທົບເຊັ່ນ: ການຄຸ້ມຄອງພູມີທັດປະສົມປະສານແລະເຂດທີ່ມີຄວາມສຳຄັນທາງດ້ານຊີວະນາໆພັນ, ລຳດັບມາດຕະການຫຼຸດຜ່ອນຜົນກະທົບ ແລະການຫຼຸດຜ່ອນຊີວະນາໆພັນເທົ່າເດີມ, ບັນຊີແດງຂອງIUCN. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ປຶກສາຫາລື, ປະກອບຄຳເຫັນຕໍ່ພາລະບົດບາດຂອງສະພາແຫ່ງຊາດໃນການຄຸ້ມຄອງປົກປັກຮັກສາຊີວະນາໆພັນ ໄປຄຽງຄູ່ກັບການພັດທະນາ ສປປລາວ ໃນຕໍ່ໜ້າ.

**(ສອນສັກ ວັນວິໄຊ)**

# ສພຂ ຜົ້ງສາລີ ປຶກສາຫາລືນິຕິກຳໃຕ້ກົດໝາຍ



(ສພຂ) -ໃນວັນທີ 30 ກັນຍາ2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ຈັດພິທີມອບ-ຮັບໃບຍັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2023 ຂອງໜ່ວຍພັກສະພາປະຊາຊົນແຂວງ, ພິທີມອບ-ຮັບໃບຍ້ອງຍໍຜູ້ມີຜົນງານດີເດັ່ນ ໃນການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ແຂວງຜົ້ງສາລີ ປະຈຳປີ 2023 ແລະ ມອບ-ຮັບຫຼຽນກາລະນຶກ 65 ປີ, ຫຼຽນຊາວໜຸ່ມຕະລຸມບອນ ໂດຍໃຫ້ກຽດເຂົ້າຮ່ວມເປັນປະທານ ຂອງສະຫາຍ ສົມຈິດ ທັບລະກອນ ກຳມະການປະຈຳພັກແຂວງ, ຮອງປະທານ ສະພາປະຊາຊົນແຂວງ, ເຂົ້າຮ່ວມມີກຳມະການພັກແຂວງ, ມີເລຂາ, ຮອງເລຂາ ແລະ ຄະນະໜ່ວຍພັກສະພາປະຊາຊົນແຂວງ, ຕາງໜ້າຈາກຄະນະຈັດຕັ້ງແຂວງ, ອົງການກວດກາພັກ-ລັດແຂວງ, ຄະນະໂຄສະນາອົບຮົມແຂວງ, ຄະນະບໍລິຫານງານຊາວໜຸ່ມແຂວງ ແລະ ສະມາຊິກພັກ ພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີໄດ້ຮັບຟັງຜ່ານບົດສະຫຼຸບການນຳພາຂອງໜ່ວຍພັກສະພາປະຊາຊົນແຂວງ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024; ຜ່ານມະຕິຕົກລົງຂອງຄະນະປະຈຳພັກແຂວງ ວ່າດ້ວຍການອະນຸມັດມອບໃບຍັ້ງຢືນໜ່ວຍພັກປອດໃສ ເຂັ້ມແຂງ ໜັກແໜ້ນ ປະຈຳປີ 2023 ສະບັບເລກທີ 477/ຄຈຂ, ລົງວັນທີ 20 ສິງຫາ2024; ຈາກນັ້ນ, ໄດ້ມີການມອບ-ຮັບໃບຍັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ2023ເຊິ່ງຕາງໜ້າຈາກຄະນະພັກຂັ້ນເທິງຂຶ້ນມອບໂດຍສະຫາຍ ສົມຈິດ ທັບລະກອນ ກຳມະການປະຈຳພັກແຂວງ,ຮອງປະທານ ສະພາປະຊາຊົນແຂວງ ແລະ ຂຶ້ນຮັບໂດຍ ຄະນະໜ່ວຍພັກສະພາປະຊາຊົນແຂວງ; ໃນໂອກາດດຽວກັນນີ້, ກໍໄດ້ມີການມອບ-ຮັບໃບຍ້ອງຍໍຜູ້ມີຜົນງານດີເດັ່ນ ໃນການແຂ່ງຂັນຍ້ອງຍໍ, ຮັກຊາດ ແລະ ພັດທະນາປະຈຳປີ 2023 ເຊິ່ງສະພາປະຊາຊົນແຂວງ ໄດ້ຮັບທັງໝົດ ຈຳນວນ 44 ທ່ານ, ຍິງ 17 ທ່ານ.

ມອບ-ຮັບຫຼຽນກາລະນຶກ 65 ປີ, ຫຼຽນຊາວໜຸ່ມຕະລຸມບອນໃຫ້ແກ່ຄະນະນຳສະພາປະຊາຊົນແຂວງຈຳນວນໜຶ່ງ ເຊິ່ງໃຫ້ກຽດຂຶ້ນມອບໂດຍສະຫາຍ ພອນສຸຈິດ ລີລາວົງ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານຊາວໜຸ່ມແຂວງ ແລະ ຂຶ້ນຮັບໂດຍການນຳສະພາປະຊາຊົນແຂວງ;

ໃນຕອນທ້າຍ, ສະຫາຍຈິດ ທັບລະກອນ ໄດ້ໂອ້ລົມ ຕໍ່ພິທີຄັ້ງນີ້ວ່າ: ກ່ອນອື່ນສະຫາຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານ ແລະ ຜົນສຳເລັດ ທີ່ບັນດາສະຫາຍຄະນະໜ່ວຍພັກ ກໍຄືສະມາຊິກພັກ ແລະ ພະນັກງານ-ລັດຖະກອນທີ່ຍາດມາໄດ້ໃນຕະຫຼອດໄລຍະປີ 2023, ຈາກນັ້ນ, ສະຫາຍ ໄດ້ເນັ້ນຕື່ມບາງບັນຫາດັ່ງນີ້: ຕ້ອງກຳແໜ້ນ ແລະ ເຊື່ອມຊຶມ ເນື້ອໃນຂອງກົດລະບຽບຂອງພັກ ໃນແຕ່ລະສະໄໝຂອງກອງປະຊຸມໃຫຍ່ຂອງພັກ ແລະ ຮູ້ຜັນຂະຫຍາຍເຂົ້າໃນການນຳພາຂອງໜ່ວຍພັກ; ສືບຕໍ່ປັບປຸງກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ເປັນແບບຢ່າງນຳໜ້າ ໃນການປະຕິບັດໜ້າທີ່ວຽກງານ, ມີລະບຽບວິໄນ, ມີແບບແຜນວິທີນຳພາທີ່ມີວິທະຍາສາດ, ປະດິດສ້າງ ແລະ ແທດເຖິງຕົວຈິງ; ເພີ່ມທະວີຜັນຂະຫຍາຍ, ເຜີຍແຜ່ແຜນການ ແລະ ຄາດໝາຍສູ້ຊົນຂອງໜ່ວຍພັກໃຫ້ສະມາຊິກພັກ, ອົງການຈັດຕັ້ງມະຫາຊົນ ແລະ ບັນດາຂະແໜງການຢູ່ພາຍໃນໃຫ້ຮັບຮູ້, ເຊື່ອມຊຶມ, ກຳແໜ້ນ ແລະ ຫັນເປັນແຜນການປະຈຳເດືອນຂອງຕົນ; ເອົາໃຈໃສ່ໃນການຕິດຕາມ, ຊຸກຍູ້ ການສະຫຼຸບຕີລາຄາປະເມີນຜົນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໂດຍອີງໃສ່ແຜນການຄາດໝາຍສູ້ຊົນທີ່ໄດ້ວາງໄວ້; ສ້າງໃຫ້ໜ່ວຍພັກສາມາດເປັນແກນນຳ ໃນການຈັດຕັ້ງນຳພາປະຕິບັດໜ້າທີ່ການເມືອງຂອງຕົນ ໂດຍສະເພາະແມ່ນວຽກງານສະພາປະຊາຊົນແຂວງໄປສູ່ຄຸນນະພາບໃໝ່ ດ້ວຍພູມປັນຍາຂອງຄະນະພັກ, ສະມາຊິກພັກແຕ່ລະສະຫາຍ; ບັນດາສະຫາຍຄະນະໜ່ວຍພັກຕ້ອງສູມຄວາມພະຍາຍາມ ລົງເລິກເຮັດວຽກງານກວດກາ, ກວດການຈັດຕັ້ງປະຕິບັດໜ້າທີ່ວຽກງານຮອບດ້ານຂອງພາຍໃນພັກ, ພາຍໃນສະພາປະຊາຊົນແຂວງ ບົນພື້ນຖານມະຕິຂອງໜ່ວຍພັກ, ຕິດພັນກັບຄຳຂວັນ 3 ເຂັ້ມແຂງ, 4 ຮັບປະກັນ ຂອງສະພາປະຊາຊົນແຂວງໃຫ້ກາຍເປັນພຶດຕິກຳຕົວຈິງ; ສະມາຊິກພັກແຕ່ລະສະຫາຍ ຕ້ອງເປັນເຈົ້າການໃນການພັດທະນາກົມກອງ ແລະ ພັດທະນາຕົນເອງດ້ວຍຄວາມເປັນແບບຢ່າງນຳໜ້າ ສົມກັບວ່າເປັນສະມາຊິກພັກ ປອດໃສ, ເຂັ້ມແຂງ, ໜັ້ກແໜ້ນ ກຽມພ້ອມເພື່ອປະກອບສ່ວນພາລະກິດທີ່ພັກ-ລັດ ໄດ້ມອບໝາຍ, ຖ້າສະມາຊິກພັກເຂັ້ມແຂງ, ມີລະບຽບວິໄນຂອງພັກ, ໜ່ວຍພັກກໍກາຍເປັນໜ່ວຍພັກປອດໃສ ເຂັ້ມແຂງ ໜັ້ກແໜ້ນ ທີ່ມີຄຸນນະພາບ.

ແລະ ໃນວັນທີ 4 ຕຸລາ 2024, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ຈັດກອງປະຊຸມຮ່ວມລະຫວ່າງ ຄະນະປະຈຳສະພາປະຊາຊົນແຂວງ ກັບ ຄະນະຮັບຜິດຊອບ ແລະ ພາກສ່ວນກ່ຽວຂ້ອງຂັ້ນແຂວງ ເພື່ອປຶກສາຫາລືກ່ຽວກັບຮ່າງນິຕິກຳໃຕ້ກົດໝາຍ ຂອງອົງການປົກຄອງແຂວງ 2 ສະບັບ ຄື: ຮ່າງຂໍ້ຕົກລົງແຂວງທ່ານເຈົ້າແຂວງວ່າດ້ວຍແຜນຜັງຕົວເມືອງໃນຊົນນະບົດ, ຂໍ້ຕົກລົງວ່າດ້ວຍການອະນຸມັດສ້າງຕັ້ງກົງຈັກອົງການພັດທະນາ ແລະ ບໍລິຫານຕົວເມືອງ ໂດຍການເປັນປະທານຮ່ວມຂອງທ່ານ ທອງສີ ເສີມສຸລິພົມ ຮອງເລຂາພັກແຂວງ, ປະທານຄະນະປະຈຳສະພາປະຊາຊົນແຂວງແລະທ່ານ ວິສອນ ລາວເມົາ ຮອງເຈົ້າແຂວງຜົ້ງສາລີ, ເຂົ້າຮ່ວມມີບັນດາທ່ານ ຄະນະປະຈຳສະພາປະຊາຊົນແຂວງ, ບັນດາພະແນກ, ອົງການທີ່ກ່ຽວຂ້ອງຂັ້ນແຂວງ ກໍຄືຄະນະຮັບຜິດຊອບສ້າງຮ່າງຂໍ້ຕົກລົງ, ມີບັນດາທ່ານຈາກຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ ລາຍງານຜົນການຄົ້ນຄວ້າ 2 ນິຕິກຳດັ່ງກ່າວ; ຮັບຟັງຕາງໜ້າຄະນະຮັບຜິດຊອບຂັ້ນແຂວງ ຊີ້ແຈງ ແລະ ຢັ້ງຢືນ ເຫດຜົນແລະຄວາມຈຳເປັນໃນການສ້າງນິຕິກຳ ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ປະກອບຄຳຄິດຄຳເຫັນ ຕາມຄຳເຈາະຈີ້ມຂອງປະທານກອງປະຊຸມ, ທັງນີ້ ກໍເພື່ອປຶກສາຫາລື ແລະ ສ້າງຄວາມເປັນເອກະພາບ ກ່ຽວກັບຫົວຂໍ້, ໂຄງຮ່າງ, ເນື້ອໃນ, ຂັ້ນຕອນໃນການສ້າງ ເພື່ອຮັບປະກັນໃຫ້ສາມາດນຳເຂົ້າກອງປະຊຸມສະພາປະຊາຊົນແຂວງ ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາ.

**(ສຸນທອງ)**

# ກອງປະຊຸມວຽກງານ ຄະນະເລຂາທິການ ສພຂ ຄຳມ່ວນ




(ສພຂ)-ໃນວັນທີ 3 ຕຸລາ 2024 ທີ່ສະພາປະຊາຊົນແຂວງຄຳມ່ວນ ໄດ້ເປີດກອງປະຊຸມວຽກງານຄະນະເລຂາທິສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II ປະຈຳ 9 ເດືອນ ແລະ ທິດທາງແຜນການ ປະຈຳ 3 ເດືອນທ້າຍປີ 2024 ໂດຍການເປັນປະທານຂອງທ່ານ ສະເຫຼີມສັກ ແກ້ວຈັນທະລາ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເລຂາທິການສະພາປະຊາຊົນແຂວງຄຳມ່ວນ, ໂດຍການເປັນກຽດເຂົ້າຮ່ວມຂອງທ່ານ ບຸນມີ ພິມມະສອນ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງຄຳມ່ວນ, ມີບັນດາທ່ານຮອງປະທານສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ/ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້, ແມ່ນເພື່ອສະຫຼຸບຕີລາຄາຄືນດ້ານດີ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ໃນການຈັດຕັ້ງປະຕິບັດວຽກງານ ປະຈຳ 9 ເດືອນ ແລະ ທິດທາງແຜນການ ປະຈຳ 3 ເດືອນທ້າຍປີ 2024 ຂອງຄະນະເລຂາທິການສະພາປະຊາຊົນແຂວງຄຳມ່ວນ, ໃນການເຮັດທີ່ຕາມພາລະບົດບາດ, ສິດ ແລະ ໜ້າທີ່ເປັນເສນາທິການຮອບດ້ານໃຫ້ແກ່ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງຄຳມ່ວນຊຸດທີIIປະຈຳ9ເດືອນ ແລະ ທິດທາງແຜນການ ປະຈຳ 3 ເດືອນທ້າຍປີ 2024; ດຳລັດວ່າດ້ວຍຈັນຍາບັນຂອງພະນັກງານ-ລັດຖະກອນສະບັບເລກທີ 184/ລບ, ລົງວັນທີ 26 ມິຖຸນາ 2019; ຄຳແນະນຳການຈັດຕັ້ງປະຕິບັດວຽກງານຈັນຍາບັນຂອງພະນັກງານ-ລັດຖະກອນ ສະບັບເລກທີ 04/ພນ, ລົງວັນທີ 2 ເມສາ2021; ດຳລັດວ່າດ້ວຍການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນສະບັບເລກທີ 300/ລບ, ລົງວັນທີ 13 ກັນຍາ2017; ພ້ອມນັ້ນ, ກອງປະຊຸມຍັງໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງຢ່າງມີບັນຍາກາດອັນຟົດຟື້ນ ແລະ ເປັນເຈົ້າການເຂົ້າໃສ່ເນື້ອໃນ ໃຫ້ມີອັນຄົບຖ້ວນສົມບູນເລິກເຊິ່ງຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງ ທັງເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າໃຫ້ໄດ້ຮັບປະສິດທິພາບ ແລະ ປະສິດທິຜົນດີຂຶ້ນເປັນກ້າວໆ. ນອກນັ້ນ, ກອງປະຊຸມຄັ້ງນີ້ໄດ້ຜ່ານຂໍ້ຕົກລົງຂອງແຂວງຄຳມ່ວນ ສະບັບເລກທີ 1452/ຈຂ, ແລະສະບັບເລກທີ 1453/ຈຂ, ລົງວັນທີ 12 ສິງຫາ2024 ວ່າດ້ວຍການອະນຸມັດໃຫ້ພະນັກງານ-ລັດຖະກອນສະພາປະຊາຊົນແຂວງຄຳມ່ວນຮັບອຸດໜູນບຳນານໃນງວດ III ປີ 2024; ຈຳນວນ 2 ທ່ານຄື: ທ່ານ ນາງ ອານົງໄຊ ສັງທອງເພັດ ຮອງເລຂາທິການສະພາປະຊາຊົນແຂວງຄຳມ່ວນແລະທ່ານດາວເຮືອງວົງຈັນດີພະນັກງານສະພາປະຊາຊົນແຂວງຄຳມ່ວນ ພັກການ-ຮັບອຸດໜູນບຳນານ, ເປັນກຽດມອບຂໍ້ຕົກລົງດັ່ງກ່າວ ໂດຍທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ.

ໃນຕອນທ້າຍກອງປະຊຸມ ທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ ໄດ້ໃຫ້ກຽດໂອ້ລົມ ແລະ ໃຫ້ທິດຊີ້ນຳຕໍ່ກອງປະຊຸມ ກ່ອນອື່ນທ່ານໄດ້ສະແດງຄວາມຍ້ອງຍໍ ແລະ ຊົມເຊີຍຕໍ່ຜົນງານທີ່ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ຍາດໄດ້ຜົນງານອັນພົ້ນເດັ່ນມາຫຼາຍດ້ານໃນໄລຍະທີ່ຜ່ານມາ ແລະ ທ່ານຍັງໄດ້ເນັ້ນໜັກໃຫ້ເອົາໃຈໃສ່ວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານຢ່າງເປັນປົກກະຕິ ແນໃສ່ເຮັດໃຫ້ພະນັກງານ, ສະມາຊິກພັກມີຄວາມອຸ່ນອຽນທຸ່ນທ່ຽງ ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຄວາມຮູ້ທາງດ້ານທິດສະດີການເມືອງ, ມີນ້ຳໃຈຮັກຊາດແລະເອົາໃຈໃສ່ແກ້ໄຂບັນດາປາກົດການຫຍໍ້ທໍ້ໃນຖັນແຖວພະນັກງານ ໃຫ້ເຂັ້ມງວດ, ຂາດຕົວ ແລະ ທັນການ; ເອົາໃຈໃສ່ການເປັນເສນາທິການຮອບດ້ານໃຫ້ແກ່ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ, ເປັນຕົ້ນການອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງຄະນະສະມາຊິກສະພາແແຫ່ງຊາດປະຈຳເຂດເລືອກຕັ້ງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ເພີ່ມທະວີການປະສານສົມທົບກັບ ບັນດາຄະນະກຳມະກາສະພາປະຊາຊົນຂັ້ນແຂວງ, ອົງການປົກແຂວງ, ໃນດ້ານຕ່າງໆ ໃຫ້ມີຄວາມໂລ່ງລຽນ, ມີປະສິດທິພາບແລະປະສິດທິຜົນດີກວ່າເກົ່າ; ພ້ອມນັ້ນ, ທ່ານຍັງໄດ້ມີຄຳເຫັນແລະສະແດງຄວາມຊົມເຊີຍຕໍ່ພະນັກງານພັກການ-ຮັບອຸດໜູນບຳນານສຳເລັດໃນການປະຕິບັດໜ້າທີ່ການເມືອງໄດ້ປະກອບສ່ວນທາງດ້ານເຫື່ອແຮງ, ສະຕິປັນຍາ ເຂົ້າໃນພາລະກິດປະຕິວັດທີ່ພັກ-ລັດມອບໝາຍໃຫ້ໃນໄລຍະຜ່ານມາ.

**(ເອື້ອ ມະໂນສິງ)**

ເກັບໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ຜູ້ເປັນພໍ່ ລໍອາສາ ຊ່ວຍເບິ່ງແຍງລ້ຽງດູລູກ

ໃນບົດປະຈຳວັນນີ້ ມີສອງເລື່ອງຈາກສອງປະເທດມາຂຽນໃຫ້ອ່ານ ຄືເລື່ອງຜູ້ຊາຍ ສ.ເກົາຫຼີ ມີສິດພັກການເພື່ອເບິ່ງແຍງລ້ຽງດູລູກ ເຊິ່ງເປັນຫົວຂໍ້ຂອງບົດນີ້ ແລະ ແຖມດ້ວຍເລື່ອງທາງການປະເທດ **ນູແວນເຊລັງ (ນິວຊີແລນ)** ກຽມຂຶ້ນຄ່າທຳນຽມເຂົ້າປະເທດຈາກນັກທ່ອງທ່ຽວ. ສຳລັບເລື່ອງທີ່ໜຶ່ງທີ່ເປັນຂ່າວອອກມາຈາກ ສ.ເກົາຫຼີ ໃນຕົ້ນເດືອນສິງຫາປີນີ້ນັ້ນ ຟັງແລ້ວອ່າວແປກໆຫູ ເພາະຕາມທັດສະນະທົ່ວໆໄປໃນສັງຄົມນັ້ນ ມັກຈະຖືວ່າວຽກເຮືອນການຊານ ວຽກເບິ່ງແຍງລູກ ດູແລລູກເລັກເດັກແດງນັ້ນ ເປັນພັນທະຂອງແມ່ຍິງໂດຍກົງ, ບໍ່ແມ່ນວຽກຕົ້ນຕໍຂອງຜູ້ເປັນຜົວ-ເປັນພໍ່. ແຕ່ແລ້ວໃນຍຸກນີ້, ທັດສະນະດັ່ງກ່າວກໍຄ່ອຍໆໝົດຄວາມໝາຍລົງ ເພາະໃນຫຼາຍໆປະເທດໄດ້ກຳນົດສິດ ແລະ ພັນທະຂອງຜູ້ເປັນຜົວເປັນພໍ່ໃນການລ້ຽງດູເບິ່ງແຍງລູກໆຢ່າງສະເໝີພາບກັບເມຍ ຫຼື ຜູ້ເປັນແມ່ຂອງເດັກ ເຊັ່ນ: ຢູ່ ສິງກະໂປ, ຍີ່ປຸ່ນ ທາງການກໍຄືບັນດາບໍລິສັດໂຮງຈັກໂຮງງານຕ່າງໆ ລ້ວນແລ້ວແຕ່ໄດ້ກຳນົດສິດລາພັກໂດຍບໍ່ຕັດຄ່າຈ້າງສຳລັບຜູ້ຊາຍທີ່ຕ້ອງການໄປຊ່ວຍເມຍເບິ່ງແຍງລ້ຽງດູລູກ. ບໍ່ພຽງແຕ່ບໍ່ຕັດຄ່າແຮງງານແຕ່ຍັງໄດ້ຮັບເງິນອຸດໜູນເປັນກອບເປັນກຳອີກດ້ວຍ. ເລື່ອງນີ້ໃນຂ່າວຕ່າງປະເທດໃນຕົ້ນເດືອນສິງຫາໃຫ້ຮູ້ວ່າ: ຜູ້ຊາຍເກົາຫຼີ ທີ່ໃຊ້ສິດລາພັກມາຢູ່ເຮືອນເພື່ອລ້ຽງດູລູກກວມເອົາ 1 ໃນ 3 (ໝາຍຄວາມວ່າແມ່ຍິງ 2 ສ່ວນ, ຜູ້ຊາຍ 1 ສ່ວນ) ຫຼື ກວມເອົາກວ່າ 30% ຕາມການເປີດເຜີຍຂອງກະຊວງຈັດຫາງານ ແລະ ແຮງງານ ສ.ເກົາຫຼີ ໃນວັນທີ 4 ສິງຫາປີນີ້, ພວກເຮົາຮູ້ວ່າ ນັບແຕ່ເດືອນມັງກອນ ຫາເດືອນມິຖຸນາ 2024 ພະນັກງານທີ່ລາພັກເພື່ອລ້ຽງດູລູກ ຢູ່ ສ.ເກົາຫຼີ ມີທັງໝົດ 69,631 ຄົນ ເພີ່ມຂຶ້ນຈາກໄລຍະດຽວກັນຂອງປີ 2023 ແມ່ນ 3.2% ໃນນັ້ນເປັນພະນັກງານຊາຍ 22,460 ຄົນ ກວມເອົາ 32.3% ນັບວ່າເປັນຄັ້ງທຳອິດທີ່ມີຈຳນວນຜູ້ຊາຍກວມເອົາກວ່າ 30%. ໃນປີ 2016 ຜູ້ຊາຍເກົາຫຼີ ທີ່ເປັນພໍ່ລາພັກມາລ້ຽງດູລູກນັ້ນມີພຽງ 8.7%. ຂໍ້ມູນທີ່ກ່າວມາຂ້າງເທິງນັ້ນເກັບກຳສະເພາະມາຈາກຜູ້ຢູ່ໃນລະບົບປະກັນຂອງກຸ່ມບໍລິສັດ, ບໍ່ລວມຂໍ້ມູນການໃຊ້ສິດລາພັກເພື່ອລ້ຽງລູກຂອງເຫຼົ່າລັດຖະກອນ ແລະ ຄູ-ອາຈານ. ນັບແຕ່ວັນທີ 1 ມັງກອນປີນີ້ເປັນຕົ້ນມາ ກົດໝາຍສະບັບໃໝ່ໄດ້ອະນຸຍາດໃຫ້ຜູ້ເປັນພໍ່-ແມ່ທີ່ອອກແຮງງານ ແຕ່ມີລູກຕໍ່າກວ່າ 18 ປີສາມາດຮັບຜົນປະໂຫຍດຮ່ວມກັນເປັນເງິນຈຳນວນສູງສຸດ 39 ລ້ານວອນ ຫາກທັງຄູ່ໃຊ້ສິດລາພັກເພື່ອເບິ່ງແຍງລ້ຽງດູລູກ ເປັນເວລາ 6 ເດືອນ ບໍ່ວ່າຈະລາພັກພ້ອມກັນ ຫຼື ຕ່າງຖ້ຽວກັນກໍໄດ້.

ສຸດທ້າຍແມ່ນຂ່າວ ຈາກ**ປະເທດ ນູແວນເຊລັງ ຫຼື ນິວຊີແລນ** ທີ່ບອກວ່າທາງການຂອງປະເທດນີ້ ພວມຢູ່ໃນໄລຍະກະກຽມເກັບຄ່າທຳນຽມເພີ່ມສຳລັບນັກທ່ອງທ່ຽວຕ່າງປະເທດ ທີ່ເຂົ້າໄປທ່ຽວປະເທດໂດຍອ້າງເຫດຜົນວ່າ ເພື່ອຫຼຸດຜ່ອນຈຳນວນນັກທ່ອງທ່ຽວລົງຍ້ອນຢ້ານວ່າຖ້າມີນັກທ່ອງທ່ຽວຫຼາຍເກີນກວ່າຄວາມສາມາດຮອງຮັບໄດ້ ກໍຈະສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ແລະ ເຫດຜົນອັນທີສອງແມ່ນເພື່ອເກັບລາຍຮັບຈາກຄ່າທຳນຽມ ແລະ ເອົາໄປໃຊ້ຈ່າຍເພື່ອຟື້ນຟູສິ່ງແວດລ້ອມທີ່ເສຍໄປກັບອຸດສາຫະກຳທ່ອງທ່ຽວ. ນັບແຕ່ປີ 2019 ເປັນຕົ້ນມາ, ຄ່າທຳນຽມທີ່ເກັບນຳນັກທ່ອງທ່ຽວແມ່ນ 35 ໂດລານູແວນເຊລັງຕໍ່ຄົນ ແລະ ໄດ້ເພີ່ມເປັນ 100 ໂດລານັບແຕ່ວັນທີ 1 ຕຸລາປີນີ້ເປັນຕົ້ນມາ. ຈາກເລື່ອງນີ້ພວກເຮົາຮູ້ວ່າການດຶງດູດນັກທ່ອງທ່ຽວນັ້ນຕ້ອງຄຳນຶງເຖິງຄວາມສາມາດໃນການຮອງຮັບ, ໜ້ອຍໂພດກໍບໍ່ກຸ້ມຄ່າຫຼາຍໂພດກໍອາດສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ເພາະນັກທ່ອງທ່ຽວນັ້ນແບກທ້ອງ, ແບກຄວາມຢາກຕ່າງໆນາໆມາພ້ອມ.

ທະນາຄານພັດທະນາລາວ
LDB Bank




# ຄູຂີ້ຄ້ານ

*# ບ່າວກະບື*

**ວັນ**ໜຶ່ງ, ຄູຈອມຄ້ານເຂົ້າມາໃນຫ້ອງຮຽນແລ້ວຖາມນັກຮຽນວ່າ: "ມື້ນີ້ພວກເຈົ້າໄດ້ກຽມບົດຮຽນແລ້ວບໍ່?"

ລູກສິດທັງໝົດພາກັນຕອບວ່າ: "ບໍ່... ພວກຂ້ານ້ອຍບໍ່ໄດ້ຕຽມ".

"ເປັນຫຍັງພວກສູຈຶ່ງຂີ້ຄ້ານຕາຍແທ້?, ເຮົາບໍ່ຕ້ອງການສອນນັກຮຽນປະເພດນີ້ດອກ" ຄູເວົ້າຂຶ້ນ ແລ້ວກໍຍ່າງອອກຫ້ອງຮຽນໄປເລີຍ.

ມື້ຕໍ່ໄປ, ພໍເຂົ້າມາຮອດຫ້ອງ ຄູກໍຖາມວ່າ: "ມື້ນີ້ພວກເຈົ້າໄດ້ກຽມບົດຮຽນແລ້ວບໍ່?". ນັກຮຽນຈຳນວນເຄິ່ງຫ້ອງຕອບວ່າ "ໂດຍ... ກຽມແລ້ວ" ແລະ ອີກເຄິ່ງໜຶ່ງຕອບວ່າ: ບໍ່... ບໍ່ໄດ້ກຽມຂ້ານ້ອຍ".

"ຂັ້ນ... ພວກທີ່ໄດ້ກຽມ ມີໜ້າທີ່ສອນພວກທີ່ບໍ່ໄດ້ກຽມ" ແລ້ວຄູກໍຍ່າງອອກຫ້ອງໄປເສຍມັ້ງ.

ມື້ທີສາມ, ຝ່າຍຄູຍ່າງເຂົ້າມາຫ້ອງຮຽນ ແລ້ວຖາມນັກຮຽນວ່າ: "ມື້ນີ້ ພວກເຈົ້າໄດ້ກຽມບົດຮຽນບໍ່?. ນັກຮຽນທັງໝົດຕອບວ່າ: "ໂດຍ...ໄດ້ກຽມ". ຄູເວົ້າວ່າ: "ເນື່ອງຈາກວ່າພວກເຈົ້າໄດ້ກຽມບົດຮຽນແລ້ວໆ, ແນ່ນອນ ພວກເຈົ້າຕ້ອງເຂົ້າໃຈບົດຮຽນ. ດັ່ງນັ້ນ ຂ້ອຍຈຶ່ງບໍ່ຈຳເປັນອະທິບາຍຕື່ມອີກ".

# A Lazy Teacher

***# BAOKBU***

**One** day, a rather lazy teacher came in a class and asked his pupils: "Have you prepared your lesson today ?"

All of them answered "no". "Why are you so lazy ? I don't want to teach such pupils", The teacher said and walked out of the room.

The next day, coming in the class he asked: "Have you prepared your lesson today ?" Half of the pupils said "yes", and a half said "no". The teacher said then : "Those who have prepared their lesson will teach those who haven't prepared it". And the teacher walked out.

The third day, he came and asked his pupils: "Have you prepared your lessontoday ?" they all answered "yes, we have". The teacher said: "As you have prepared your lesson already, certainly you understood it. So it isn't necessary for me to explain it again".

ຕາມພາສາ ກາຕູນ




● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ